# CHAMPA 占芭 ຈຳປາ

03/2014 ສະບັບທີ 102



**ພິທີເປີດສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ທີ່ນະຄອນຊຽງໄຮ້ ສປ ຈີນຢ່າງເປັນທາງການ**

**ງານລາຕີມ່ວນຊື່ນແບບຄອບຄົວ ຮ່ວມສະເຫຼີມສະຫຼອງບຸນກຸດຈີນ–ລາວຈັດຂຶ້ນຢ່າງຄຶກຄື້ນ**

**ຊ່ອງໂທລະພາບຕ່າງປະເທດຊ່ອງທຳອິດທີ່ອອກອາກາດດ້ວຍພາສາລາວເປີດບໍລິການແລ້ວ**

ISSN 1673-3266

9 771673 326056 03>



Value Related To History
Creation Leading To Future
心以致远
行于维新
OUR RENOVATION OUR EXPECTATION
源于 Since 1912
ເກີດມາຈາກປີ 1912
ນ້ຳໃຈກວ້າງຂວາງສູງສົ່ງ
ມຸ່ງໝັ້ນການປ່ຽນແປງໃໝ່
富滇銀行
FUDIAN BANK
ທະນາຄານຟູດຽນ
www.fudian-bank.com 网上银行
www.087196533.com 手机银行
0871－96533 24小时服务热线
ທະນາຄານອິນເຕີເນັດ ທະນາຄານໂທລະສັບມືຖື ສາຍດ່ວນບໍລິການ 24 ຊົ່ວໂມງ




万象中心 ວຽງຈັນເຊັນເຕີ
开启新的时代
ເປີດໂລກແຫ່ງຍຸກສະໄໝໃໝ່
首个一站式购物中心，24小时繁华，永不落幕；
ສູນລວມສິນຄ້າແບຼນເນມແຫ່ງທຳອິດ.ຄຶກຄື້ນຕະຫຼອດເວລາ. ບໍ່ມີທີ່ສິ້ນສຸດ
万象中心盛大招商进行中
ວຽງຈັນເຊັນເຕີພວມດຳເນີນການພົວພັນຫາລູກຄ້າຢ່າງເປັນທາງການ
品牌大商抢先入驻，邀您共赢财富盛宴
ທຸລະກິດການຄ້າຂະໜາດໃຫຍ່ຍາດແຍ່ງກັນເຂົ້າມາລົງທຶນ.
ເຊີນທ່ານຮ່ວມກັນເຂົ້າມາຊື່ນຊົມກັບຄວາມທັນສະໄໝຂອງສູນການຄ້າລະດັບສາກົນ
铂金级写字楼，即将隆重揭幕
ໂຮງຮູບເງົາ PLATINUM ແລະ
ຕຶກສຳນັກງານຫ້ອງການ ກໍ່ໃກ້ຈະເປີດໂຕຢ່າງອະລັງການ
首席国际品质商务中心 · 企业形象的平台 · 企业成长的平台
ເປັນສູນກາງຜູ້ນຳສິນຄ້າແບຼນເນມລະດັບສາກົນ.
ສູນລວມພາບລັກແລະເປັນເວທີການເຕີບໃຫຍ່ຂະຫຍາຍຕົວຂອງສຳນັກງານວິສາຫະກິດ
· 马来西亚铂金影院 PLATINUM Cinema
· 泰国最大零售代理商CMG集团 Central Marketing Group ( CMG )
· 泰国服装品牌代理龙头ICC集团 International Public Company ( ICC )
SHISEIDO CLINIQUE OMEGA Dior GUCCI MAC Lee
LANCÔME ESTÉE LAUDER ROLEX RADO Guy Laroche benefit
VIENTIANE CENTER
萬象中心
Hotline/+856 021-
217666 212333
投资商：云南建工集团有限公司暨云南省海外投资有限公司
ຜູ້ລົງທຶນໂຄງການ: ບໍລິສັດວິສະວະກຳກໍ່ສ້າງຢູນນານກຸ່ມຈຳກັດ-ບໍລິສັດລົງທຶນຕ່າງປະເທດແຂວງຢູນນານຈຳກັດ
INVESTORS: YUNNAN CONSTRUCTION ENGINEERING GROUP CO.,LTD. AND YUNNAN PROVINCIAL OVERSEAS INVESTMENT CO.,LTD.
吉达蓬集团公司
ບໍລິສັດກິດຕະພົງກຸ່ມຈຳກັດ
KRITTAPHONG GROUP CO.,LTD.
整合推广：[my feel 麦飞广告]
开发商：北隆赞湖综合发展有限公司
ຜູ້ພັດທະນາໂຄງການ: ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ
DEVELOPER: NORTH NONGCHAN COMPLEX DEVELOPMENT CO.,LTD.
项目地址：老挝万象市库央路
ທີ່ຢູ່ໂຄງການ: ຖະໜົນຄູວຽງ-ນະຄອນຫຼວງວຽງຈັນ
PROJECT ADDRESS:KHOU VIENG ROAD, VIENTIANE, LAOS



ລົມລະດູບານໃໝ່ໄດ້ພັດຄວາມຝັນຈີນໃຫ້ຂຽວ
ອຸ່ມທຸ່ມອີກ
春风又绿中国梦



# ສາລະບານ

03/2014 ສະບັບທີ 102









## ສາລະຄະດີພິເສດ 本刊特稿


04.ທ່ານນາງ ປານີ ຢາທໍ່ຕູ້ ປະທານສະພາແຫ່ງຊາດລາວຕ້ອນຮັບການເຂົ້າຢ້ຽມຄຳນັບຂອງທ່ານຈ້າວຈີ່ນກຳມະການປະຈຳຄະນະພັກທັງເປັນຫົວໜ້າຄະນະໂຄສະນາຄະນະພັກແຂວງຢຸນນານຈີນທີ່ນະຄອນຫຼວງວຽງຈັນ
06.ທ່ານ ຈ້າວຈີ່ນ ກຳມະການປະຈຳຄະນະພັກທັງເປັນຫົວໜ້າຄະນະໂຄສະນາຄະນະພັກແຂວງຢຸນນານຈີນເຂົ້າຢ້ຽມຄຳນັບທ່ານເຈືອງ ສົມບູນຂັນ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກປະຊາຊົນປະຕິວັດລາວ
08.ງານລາຕີມ່ວນຊື່ນແບບຄອບຄົວ ຮ່ວມສະເຫຼີມສະຫຼອງບຸນກຸດຈີນ-ລາວຈັດຂຶ້ນຢ່າງຄຶກຄື້ນ
16.ສະຖານທູດຈີນປະຈຳລາວໄດ້ຈັດງານຮ່ວມສະເຫຼີມສະຫຼອງບຸນກຸດຈີນປີ 2014
18.ຜົນສຳເລັດໃໝ່ໃນການຮ່ວມມືຈີນລາວ
19.ຊ່ອງໂທລະພາບຕ່າງປະເທດຊ່ອງທຳອິດທີ່ອອກອາກາດດ້ວຍພາສາລາວເປີດບໍລິການແລ້ວ


## ຄວາມໄຝ່ຝັນຂອງຈີນ 中国梦


23.ດ່ານພົຽນມາແມ່ນ້ຳມູ້ຈ່ຽງ
25.ດ່ານເມືອງລຽນນະຄອນພູເອີ


## ປະຕູເມືອງຈີນ 中国之窗


28.ສະຖາບັນຂົງຈື້ແຈກຢາຍຢູ່ໃນທົ່ວໂລກ
32.ປະຊາຊົນປັກກິ່ງຊົມໃຊ້ການບໍລິການຂອງອົງການປົກຄອງໂດຍຜ່ານອິນເຕີເນັດ


## ການໄປມາຫາສູ່ກັນສັມດຸະວະໄມຕີຈິດ 友好往来


34.ພິທີເປີດສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ທີ່ນະຄອນຊຽງໄຮ້ ສປ ຈີນຢ່າງເປັນທາງການ
36.ສປປ ລາວ ເຂົ້າຮ່ວມກອງປະຊຸມສາກົນກ່ຽວກັບການຄ້າສັດປ່າທີ່ຜິດກົດໝາຍທີ່ຈັດຂຶ້ນຢູ່ລອນດອນ
38.ເສດຖະກິດການຄ້າຈີນ-ອາຊຽນເລື່ອນຊັ້ນອອກເຮືອສາຍໃໝ "ເຜັດນິນຈີນດາ 10 ປີ"


## ການທ່ອງທ່ຽວທັດສະນາຈອນ 旅游纵横


44.ພາທ່ານໄປຊົມເກາະດອນ


## ລຽບຊົມວັດທະນະທຳ 文化博览


50.ເຕົ້ານ້ຳຊາຈູນີຂອງແຕ້ຈິວ


## ໂຮງຮຽນຊື່ດັງທີ່ມີສະເໜ່ 魅力名校


52.ມະຫາວິທະຍາໄລຫູນານ


## ບໍລິການເພື່ອທ່ານ 为您服务


54.ເລືອກອາຫານປະສົມປະສານກັນໃຫ້ມີທາດບຳລຸງ


## ຮຽນພາສາຈີນ 学汉语


60.ຮຽນພາສາຈີນ



国内广告总代理：
云南恩泽文化传播有限公司
网络商务代理：
昆明艾玛尼网络科技有限公司
办公室电话：
86-871-64668646（传真）
广告部电话：
86-871-64668646
http://www.gms-seasa.com
Email:zrz125576@live.cn
邮编：650034

ຕົວແທນໃຫຍ່ໂປສະເຕີພາຍໃນປະເທດ:
ບໍລິສັດເຜີຍແຜ່ວັດທະນະທຳເອິນເຈີຢູນນານຈຳກັດ
ຕົວແທນອິນເຕີເນັດຝ່າຍການຄ້າ:
ບໍລິສັດວິທະຍາສາດເຕັກນິກອິນເຕີເນັດອາຍມານີຄຸນມິງຈຳກັດ
ເບີໂທຫ້ອງການ: 86-871-64668646 (ແຟັກ)
ເບີໂທພາກສ່ວນໂປສະເຕີ: 86-871-64668646
http:||www.gms-seasa.com
Email:zrz125576@live.cn
ລະຫັດໄປສະນີ: 650034

http://www.yunnangateway.com
E-mail: ynzhanba@163.com



主　管　中华人民共和国国务院新闻办公室
ເຈົ້າໜ້າທີ່ຄຸ້ມຄອງໂດຍ　ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
主　办　云南省人民政府新闻办公室
ຈັດທຳໂດຍ　ຫ້ອງການຂ່າວປົກຄອງແຂວງຢຸນນານ
编辑出版《占芭》杂志社
ຮຽບຮຽງພິມຈຳໜ່າຍ　ສຳນັກພິມວາລະສານ《ຈຳປາ》



总顾问　赵 金 卯稳国
ທີ່ປຶກສາໃຫຍ່　ຈາວຈິນ ເມົາເວິນກົວ
顾　问　宣宇才 蔡春生 张瑞才 李联斌
ທີ່ປຶກສາ　ຊວນຢູໄຊ ໄຊຊຸນແຊງ ຈ່າງຢູ້ຍໄຊ ລີລຽນປິ່ນ
社　长　李　茜
ຜູ້ອຳນວຍການໃຫຍ່　ລີສ້ຽນ
副社长　郭建初 吴静波 田虎青 海　江
ຮອງຜູ້ອຳນວຍການໃຫຍ່　ກົວຈຽນຊູ ອູຈິນໂປ ທຽນຫູຊິນ ໄຮຈຽງ
总编辑　杨　云
ຫົວໜ້າບັນນາທິການໃຫຍ່　ຢາງຢູນ
总编室主任　禹正玉
ຫົວໜ້າ ພິມຈຳໜ່າຍ　ຢູຍເຈີງຢູຍ
编辑总监　李　可
ຫົວໜ້າຫ້ອງການບັນນາທິການ　ຫຼີເຄີ
编辑部副主任　苏雯雯
ຮອງຫົວໜ້າພະແນກບັນນາທິການ　ຊູ່ເວີນເວີນ
翻　译　北京外国语大学亚非学院 李小元 吴敦信 刘仁和
ຜູ້ແປພາສາລາວ　ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ ຫຼີຊຽວຢວນ ອູດຶນສິນ ລິວເຢີນເຫີ
老挝文译审　刘仁和
ຜູ້ກວດແກ້ພາສາລາວ　ລິວເຢີນເຫີ
老挝文编辑　白　艳
ບັນນາທິການພາສາລາວ　ປາຍຍຽນ
美术总监　祝　群
ຜູ້ຄຸ້ມງານຝ່າຍສິລະປະ　ຈູ້ສິນ
网络总监　张守义　总监助理　张俊宏
ຜູ້ຄຸ້ມງານຝ່າຍອິນເຕີເນັດ　ຈາງເຊີຢີ　ຜູ້ຊ່ວຍຜູ້ຄຸ້ມງານ　ຈາງຈຸນຮອງ
网络部副主任　李　涛　编辑　李文君 赵艳娟
ຮອງຫົວໜ້າພະແນກອິນເຕີເນັດ　ລີທາວ　ບັນນາທິການ　ລີເວີນຈູນ ໂຈ້ວຢ້ຽນຈຽນ
发　行　陈　龙 邹和平
ພິມຈຳໜ່າຍແຈກຈ່າຍ　ແຊງລົງ ໂຈວເຮີພິງ
编　务　陆　蕊 汪伟云 贺新倩
ພະນັກງານຝ່າຍປົກຄອງ　ລູຢູຍ ຫວ່າງເວີຍຢູນ ເຮີຊິ່ງສ້ຽງ



发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673-3266
ລະຫັດວາລະສານປະເທດຈີນ: CN53-1200/D

地址：云南省昆明市环城西路577号
编辑部电话：86-871-64112975
办公室电话：86-871-64101644
传真：86-871-64112975
邮编：650034

ສະຖານທີ່: ຖະໜົນທອນເຊີນຊີລູເຮືອນເລກທີ 577
ຊັ້ນ3ນະຄອນຄຸນມິງແຂວງຢູນນານ ສປ ຈີນ
ລະຫັດໄປສະນີ: 650034
ໂທ: 86-871-64112975　64101644
ແຟກ: 86-871-64112975

《占芭》杂志社驻老挝代表处：
地址：万象市苏发努冯路湄公酒店二栋2211室
电话：00856-21-254866

ຫ້ອງການຕາງໜ້າສຳນັກພິມວາລະສານ《ຈຳປາ》ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ຢູ່:ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີໂທ: 00856-21-254866

广告经营许可证号：5300004000052　ເລກໃບປາຕັງທຸລະກິດໂຄສະນາ: 5300004000052
印刷：昆明富新春彩色印务有限公司

RMB ￥10

图 / 蓝 天

# ທ່ານນາງ ປານີ ຢາທໍ່ຕູ້ ປະທານສະພາແຫ່ງຊາດລາວຕ້ອນຮັບການເຂົ້າຢ້ຽມຂໍ່ານັບ29ທ່ານຈ້າວຈິ່ນກຳມະການປະຈຳຄະນະພັກທັງເປັນຫົວໜ້າຄະນະໂຄສະນາຄະນະພັກແຂວງຢຸນນານຈີນທີ່ນະຄອນຫຼວງວຽງຈັນ



ທ່ານນາງ ປານີ ຢາທໍ່ຕູ້ໄດ້ດຳເນີນການເຈລະຈາກັບທ່ານ ຈາວຈິ່ນ
巴妮・亚陶都与赵金进行会谈

## 老挝国会主席巴妮・亚陶都在万象会见云南省委常委、省委宣传部部长赵金

1 月 27 日，老挝人民革命党中央政治局委员、国会主席巴妮・亚陶都在老挝首都万象会见了云南省委常委、省委宣传部部长赵金。

ວັນທີ 27 ມັງກອນ 2014,ຢູ່ທີ່ນະຄອນຫຼວງວຽງຈັນ, ທ່ານນາງປານີ ຢາທໍ່ຕູ້,ກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ,ປະທານສະພາແຫ່ງຊາດລາວໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານຈ້າວຈິ່ນ,ກຳມະການປະຈຳຄະນະພັກທັງເປັນຫົວໜ້າຄະນະໂຄສະນາຄະນະພັກແຂວງຢຸນນານຈີນ.

ທ່ານນາງປານີ ຢາທໍ່ຕູ້ໄດ້ສະແດງຄວາມຊົມເຊີຍໃນລະດັບສູງຕໍ່ຜົນສຳເລັດຂອງງານລາຕີຮ່ວມສະເຫຼີມສະຫຼອງບຸນກຸດຈີນ-ລາວ.ທ່ານກ່າວວ່າ,ຄະນະຜູ້ແທນແຂວງຢຸນນານຄັ້ງນີ້ໄດ້ນຳເອົາສິລະປະວັດທະນະທຳທີ່ມີສີສັນພິເສດຂອງແຂວງຢຸນນານມາສະແດງຢູ່ລາວ,ເຊິ່ງໄດ້ສະແດງໃຫ້ເຫັນວັດທະນະທຳຊົນເຜົ່າທີ່ມີຫຼາກຫຼາຍສີສັນຂອງແຂວງຢຸນນານ,ແລະ ສ້າງຄວາມມ່ວນຊື່ນໃຫ້ແກ່ປະຊາຊົນລາວ,ເປັນການຢ້ຽມຢາມເທື່ອໜຶ່ງທີ່ສ່ອງແສງເຖິງຄວາມສາມັກຄີ ແລະ ມິດຕະພາບ,ມີຄວາມໝາຍສຳຄັນຕໍ່ການສືບທອດມິດຕະພາບລາວຈີນ.ປະເທດລາວຖືພັກຄອມມູນິດຈີນ,ແລະ ປະຊາຊົນຈີນເປັນໝູ່ເພື່ອນທີ່ໄວ້ໃຈທີ່ສຸດ,ບໍ່ວ່າສະພາບການປ່ຽນແປງແນວໃດກໍ່ຕາມ,ຈະຢູ່ນຳກັນກັບປະເທດຈີນຕະຫຼອດໄປ.ຈີນເປັນແບບຢ່າງທີ່ດີສຳລັບປະເທດລາວ,ຮູບການພັດທະນາຂອງຈີນໄດ້ສ້າງຄວາມໝັ້ນໃຈໃຫ້ແກ່ປະເທດລາວທີ່ຍຶດໝັ້ນເສັ້ນທາງສັງຄົມນິຍົມ.ທ່ານນາງປານີສະເໜີໃຫ້ສອງຝ່າຍເພີ່ມທະວີການແລກປ່ຽນ ແລະ ການຮ່ວມມືທາງດ້ານຖະແຫຼງຂ່າວວັດທະນະທຳໃນຂະນະດຽວກັນທີ່ເພີ່ມທະວີການຮ່ວມມືດ້ານເສດຖະກິດ,ຫວັງວ່າລາຍການໂທລະພາບດີຈີຕອນ ແລະ ວາລະສານຈຳປາຂອງຈີນຢູ່ລາວຈະຊ່ວຍເຫຼືອປະຊາຊົນລາວໄດ້ຄວາມຮູ້ ແລະ ບົດຮຽນຫຼາຍກວ່າເກົ່າ,ໂດຍສະເພາະແມ່ນເພີ່ມເນື້ອໃນດ້ານການໂຄສະນາເຜີຍແຜ່ຂໍ້ມູນກ່ຽວກັບການປູກຝັງ,ປຸງແຕ່ງຜະລິດຕະພັນກະສິກຳ,ແລະ ເຕັກໂນໂລຊີກະສິກຳທີ່ກ້າວໜ້າ.

ທ່ານຈ້າວຈິ່ນກ່າວວ່າ,ຜົນສຳເລັດຂອງງານຄັ້ງນີ້ເປັນຜົນການຮ່ວມມືລະຫວ່າງນັກສິລະປິນແຂວງຢຸນນານກັບນັກສິລະປິນລາວ,ກໍ່ເປັນການສົ່ງເສີມມິດຕະພາບມູນເຊື້ອລະຫວ່າງປະຊາຊົນຈີນລາວ,ເປັນການເຄື່ອນໄຫວຕົວຈິງທີ່ລົງເລິກການຮ່ວມມືສອງຝ່າຍ.ຂ້າພະເຈົ້າເຊື່ອໝັ້ນວ່າ,ຜ່ານການຮ່ວມມືຕົວຈິງ,ຈະຍົກລະດັບການຮ່ວມມືລະຫວ່າງພາກສ່ວນຖະແຫຼງຂ່າວວັດທະນະທຳລະຫວ່າງແຂວງຢຸນນານຈີນກັບປະເທດລາວ.



ທ່ານນາງ ປານີ ຢາທໍ່ຕູ້ໄດ້ຈັບມືກັນກັບທ່ານ ຈາວຈິ່ນຢ່າງສະໜິດສະໜົມ
巴妮・亚陶都与赵金亲切握手

图 / 蓝 天

# ທ່ານ ຈ້າວຈິ່ນ ກຳມະການປະຈຳຄະນະພັກທັງເປັນຫົວຫນ້າຄະນະໂຄສະນາຄະນະພັກແຂວງຢຸນນານຈີນເຂົ້າຢ້ຽມຂ່ຳນັບທ່ານເຈືອງ ສົມບູນຂັນ ຫົວຫນ້າຄະນະໂຄສະນາອົບຮົມສູນກາງພັກປະຊາຊົນປະຕິວັດລາວ



ທ່ານເຈືອງ ສົມບູນຂັນໄດ້ດຳເນີນການເຈລະຈາກັບທ່ານ ຈາວຈິ່ນ
尊・宋奔坎与赵金进行会谈

## 云南省委常委、省委宣传部部长赵金拜会老挝中宣部部长尊・宋奔坎

1 月 25 日，云南省委常委、省委宣传部部长赵金在老挝首都万象拜会了老挝人民革命党中央书记处书记、中宣部部长尊・宋奔坎。

ວັນທີ 25 ມັງກອນ 2014,ຢູ່ທີ່ນະຄອນຫຼວງວຽງຈັນ, ທ່ານຈ້າວຈິ່ນ,ກຳມະການປະຈຳຄະນະພັກທັງເປັນຫົວໜ້າຄະນະໂຄສະນາຄະນະພັກແຂວງຢຸນນານຈີນໄດ້ເຂົ້າຢ້ຽມອຳນັບທ່ານເຈືອງ ສົມບູນຂັນ,ເລຂາທິການສູນກາງພັກ,ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກປະຊາຊົນປະຕິວັດລາວ.

ໃນເວລາພົບປະກັນ,ທ່ານເຈືອງ ສົມບູນຂັນໄດ້ອະທິບາຍຄວາມສຳຄັນພິເສດຂອງສາຍພົວພັນຢຸນນານຈີນກັບລາວໃຫ້ທ່ານຈ້າວຈິ່ນຊາບ,ແລະ ຄວາມໝາຍສຳຄັນທີ່ຈັດງານຮ່ວມສະເຫຼີມສະຫຼອງບຸນກຸດຈີນ,ຫວັງວ່າພາກສ່ວນໂຄສະນາຂອງແຂວງຢຸນນານກັບລາວເພີ່ມທະວີການຮ່ວມມືກັນ, ແລະ ສ້າງກົນໄກຮ່ວມມືເປັນປະຈຳ. ທ່ານໄດ້ຕີລາຄາສູງຕໍ່ບົດບາດຂອງວາລະສານຈຳປາຢູ່ລາວ,ຫວັງວ່າຜ່ານການແລກປ່ຽນດ້ານສື່ມວນຊົນທີ່ໃກ້ຊິດກວ່າເກົ່າ,ເພື່ອຊຸກຍູ້ໃຫ້ການຮ່ວມມືລາວຈີນຂະຫຍາຍຕົວເລື້ອຍໆ.

ທ່ານຈ້າວຈິ່ນໄດ້ເຫັນດີນຳຂໍ້ສະເໜີຂອງທ່ານເຈືອງ ສົມບູນຂັນ.ທ່ານກ່າວວ່າ,ການຮ່ວມມືດ້ານຖະແຫຼງຂ່າວລະຫວ່າງແຂວງຢຸນນານກັບລາວມີຄວາມໝາຍສຳຄັນ, ເປັນຂົວທີ່ເຊື່ອມຕໍ່ຈິດໃຈຂອງປະຊາຊົນສອງຊາດ,ຮັບຮູ້ວັດທະນະທຳເຊິ່ງກັນ ແລະ ກັນ,ແລະ ເພີ່ມທະວີມິດຕະພາບທີ່ບໍລິສຸດ.ຫວັງວ່າສອງຝ່າຍເພີ່ມທະວີການຮ່ວມມື, ຊຸກຍູ້ໂຄງການໂທລະພາບດີຈີຕອນຕື່ມອີກ,ແລະ ດຳເນີນວຽກງານພັດທະນາຊ່ອງສາກົນ ແລະ ວາລະສານຈຳປາຂອງແຂວງຢຸນນານໃຫ້ດີ.

ໃນໄລຍະຢ້ຽມຢາມລາວ,ທ່ານຈ້າວຈິ່ນຍັງໄດ້ຢ້ຽມຢາມທ່ານກ່ວນຮວາປິ່ງ,ເອກອັກຄະລັດຖະທູດຈີນປະຈຳລາວ,ພົບປະກັບທ່ານບໍ່ແສງຄຳ ວົງດາລາ,ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວລາວ,ແລະ ສຳຫຼວດວຽກງານຢູ່ບໍລິສັດໂທລະພາບດີຈີຕອນລາວ,ຫ້ອງການຕາງໜ້າວາລະສານຈຳປາ ສປ ຈີນປະຈຳລາວ,ຮ້ານປຶ້ມພາສາຈີນຊິ່ນຈີ່,ສຳນັກງານຜູ້ຕາງໜ້າວິສາຫະກິດຢຸນນານຢູ່ນະຄອນຫຼວງວຽງຈັນ, ແລະ ສຳນັກງານປະຈຳລາວຂອງບໍລິສັດວິສະວະກຳກໍ່ສ້າງຢຸນນານ.





ທ່ານເຈືອງ ສົມບູນຂັນ(ຂວາມື5)ໄດ້ຖ່າຍຮູບຮ່ວມກັນກັບສະມາຊິກຄະນະຜູ້ແທນຢຸນນານ
尊・宋奔坎（右五）与云南代表团成员合影

图 / 蓝 天

# ງານລາຕີມ່ວນຊື່ນແບບຄອບຄົວ ຮ່ວມສະເຫຼີມສະຫຼອງບຸນກຸດຈີນ-ລາວຈັດຂຶ້ນຢ່າງຄຶກຄື້ນ



ທ່ານ ນາງປານີ ຢາທໍ່ຕູ້(ຂວາມື 2) ປະທານສະພາແຫ່ງຊາດລາວ, ທ່ານຈາວຈິ່ນ(ຊ້າຍມື1)ກຳມະການປະຈຳຄະນະພັກແຂວງ,ຫົວໜ້າຄະນະໂຄສະນາຄະນະພັກແຂວງຢຸນນານພັກຄອມມູນິດຈີນ, ທ່ານບໍ່ແສງຄຳ ວົງດາລາ(ຊ້າຍມື2)ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວວັດທະນະທຳແລະທ່ອງທ່ຽວແຫ່ງປະເທດລາວ,ທ່ານກວນຮວາປິງ(ຂວາມື1)ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ສປ ຈີນປະຈຳລາວຮ່ວມກັນລິເລີ່ມກົດປຸ່ມໄຟດອກງານລາຕີ.

老挝国会主席巴妮·亚陶都（右二）、中共云南省委常委、省委宣传部部长赵金（左一）、老挝新闻文化旅游部部长波显坎·翁达拉（左二）、中国驻老挝大使馆关华兵（右一）共同启动晚会焰火

## “中老情·合家欢”春节联欢晚会精彩纷呈

由中国云南广播电视台和老挝国家电视台首次联合举办的主题为“中老情·合家欢”的大型春节联欢晚会于 1 月 25 日晚在老挝首都万象精彩上演，浓郁的中国特色，精彩的文艺表演以及彼此交融的两国传统文化，让现场的上千名中老观众赞叹不已。

ໂຄມໄຟສີແດງຫ້ອຍຂຶ້ນ,ປ້າຍຕົວໜັງສື“ 福 (fu)” ແປວ່າຄວາມສຸກກໍ່ຕິດໃສ່ຝາ.ຕອນຄ່ຳວັນທີ 25 ມັງກອນ 2014,ງານລາຕີມ່ວນຊື່ນແບບຄອບຄົວຮ່ວມສະເຫຼີມສະຫຼອງບຸນກຸດຈີນຂະໜາດໃຫຍ່ພາຍໃຕ້ຫົວຂໍ້“ມິດຕະພາບຈີນລາວຮ່ວມມ່ວນຊື່ນແບບຄອບຄົວ”ທີ່ຈັດໂດຍສະຖານີວິທະຍຸໂທລະພາບແຂວງຢຸນນານ ແລະ ສະຖານີໂທລະພາບແຫ່ງຊາດລາວໄດ້ໄຂຂຶ້ນຢູ່ນະຄອນຫຼວງວຽງຈັນ. ສີສັນຈີນທີ່ເຂັ້ມຂຸ້ນ,ການສະແດງສິລະປະທີ່ຄຶກຄື້ນມ່ວນຊື່ນ,ພ້ອມດ້ວຍວັດທະນະທຳມູນເຊື້ອຂອງສອງປະເທດຈີນລາວທີ່ເຊື່ອມໂຍງເຂົ້າກັນ,ເຮັດໃຫ້ຜູ້ຊົມເກືອບພັນຄົນໃຫ້ຄວາມຍ້ອງຍໍໃນລະດັບສູງ.

ໃນຕອນຄ່ຳວັນທີ 25 ມັງກອນ 2014,ທ່ານນາງປານີ ຢາທໍ່ຕູ້,ກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ,ປະທານສະພາແຫ່ງຊາດລາວ,ທ່ານເຈືອງ ສົມບູນຂັນ,ຫົວໜ້າຄະນະໂຄສະນາ ແລະ ອົບຮົມສູນກາງພັກ,ທ່ານສິນລະວົງ ຄຸດໄພທູນ, ລັດຖະມົນຕີ ຫົວໜ້າຫ້ອງວ່າການລັດຖະບານ,ທ່ານບໍ່ແສງຄຳ ວົງດາລາ,ລັດຖະມົນຕີວ່າການ,ທ່ານສະຫວັນຄອນ ຣາຊະມົນຕີ,ລັດຖະມົນຕີຊ່ວຍວ່າການກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ,ທ່ານ ນາງສູນທອນ ໄຊຍະຈັກ, ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດລາວ, ທ່ານກ່ວນຮວາປີງ,ເອກອັກຄະລັດຖະທູດຈີນປະຈຳລາວ,



ທ່ານຈາວຈິ່ນກຳມະການປະຈຳຄະນະພັກແຂວງ,ຫົວໜ້າໂຄສະນາຄະນະພັກແຂວງຢຸນນານພັກຄອມມູນິດຈີນຂຶ້ນກ່າວຄຳປາໄສທີ່ງານລາຕີສະຫລອງບຸນກຸດຈີນ.

中共云南省委常委、省委宣传部部长赵金在春节晚会上致辞



ທ່ານ ນາງປານີ ຢາທໍ່ຕູ້ ປະທານສະພາແຫ່ງຊາດລາວ, ທ່ານຈາວຈິ່ນກຳມະການປະຈຳຄະນະພັກແຂວງ,ຫົວໜ້າໂຄສະນາຄະນະພັກແຂວງຢຸນນານພັກຄອມມູນິດຈີນພ້ອມກັນຍ່າງເຂົ້າສູ່ຫ້ອງໂຖງໃຫຍ່ງານລາຕີ.

老挝国会主席巴妮·亚陶都和中共云南省委常委、省委宣传部部长赵金一道步入晚会大厅



ທ່ານ ນາງລີຊຽນ(ຊ້າຍມື3) ຮອງຫົວໜ້າຄະນະ ໂຄສະນາຄະນະພັກແຂວງ ,ຫົວໜ້າ ໂຄສະນາຕໍ່ຕ່າງປະເທດຄະນະພັກແຂວງຢຸນນານທັງເປັນຫົວໜ້າຫ້ອງການຂ່າວຕໍ່ຕ່າງປະເທດອຳນາດການປົກຄອງແຂວງຢຸນນານ ແລະ ການນຳອື່ນໆໄດ້ຊົມງານລາຕີ
云南省委宣传部副部长、省委外宣办、省政府新闻办主任李茜（左三）等领导观看晚会

ທ່ານຈ້າວຈິ່ນ,ຫົວໜ້າຄະນະ ໂຄສະນາຄະນະພັກແຂວງຢຸນນານຈີນ,ຜູ້ຕາງໜ້າຈີນຕ່າງດ້າວ ແລະ ເຊື້ອສາຍ



ບົດຟ້ອນ《ຂັວນນົກຍູງ》
舞蹈《雀之灵》

ຈີນຢູ່ລາວ,ພ້ອມດ້ວຍປະຊາຊົນລາວວົງການຕ່າງໆໄດ້ຮ່ວມກັນເຂົ້າຊົມງານຄັ້ງນີ້.

ງານຄັ້ງນີ້ແມ່ນກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວລາວ,ຄະນະ ໂຄສະນາຄະນະພັກແຂວງຢຸນນານຈີນ,ສະຖານທູດຈີນປະຈຳລາວຮ່ວມກັນເປັນເຈົ້າພາບຈັດຂຶ້ນ.ຢູ່ສະຖານທີ່ຈັດການສະແດງມີບັນຍາກາດຢ່າງເບີກບານມ່ວນຊື່ນ.ນັກສະແດງທັງສອງປະເທດຈີນລາວລວມ 100 ກວ່າຄົນໄດ້ສະແດງ17 ລາຍການໃຫ້ຜູ້ຊົມ.ໃນນັ້ນມີສີສັນຈີນ,ກໍ່ມີສີສັນຂອງປະເທດລາວ,ທັງມີສີສັນສອງປະເທດປະສົມປະສານກັນ.ນັກສິລະປິນຊື່ດັງຫຼາຍຄົນຂອງແຂວງຢຸນນານໄດ້ສະແດງການຮ້ອງ,ການຟ້ອນ ແລະ ກາຍະສິນ,ນັກສິລະປິນລາວກໍ່ໄດ້ສະແດງການຟ້ອນ“ດອກຈຳປາ”,“ປີໃໝ່ລາວ” ແລະ ອື່ນໆ.ນັກສິລະປິນສອງປະເທດຍັງໄດ້ຮ່ວມກັນຮ້ອງເພງ“ດື່ມນ້ຳຮ່ວມສາຍນ້ຳດຽວກັນ”, “ເປົ່າແຄນຮ່ວມກັນ”,ຊຶ່ງສ່ອງແສງເຖິງມິດຕະພາບອັນເລິກເຊິ່ງລະຫວ່າງປະຊາຊົນສອງຊາດ.ໃນງານດັ່ງກ່າວຍັງໄດ້ສຳພາດຄົນຈີນທີ່ດຳເນີນການກໍ່ສ້າງຢູ່ລາວ,ໄດ້ສະແດງໃຫ້ເຫັນເຖິງການປະກອບສ່ວນຂອງເຂົາເຈົ້າທີ່ໄດ້ອຸທິດເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນການພັດທະນາສັງຄົມລາວ,ປະກອບສ່ວນເຂົ້າໃນການສົ່ງເສີມມິດຕະພາບຈີນລາວ,ສະພາບການເຮັດວຽກ ແລະ ດຳລົງຊີວິດຢູ່ລາວ,ເຊິ່ງໄດ້ຮັບສຽງຕົບມືຈາກຜູ້ຊົມຢ່າງຫຼວງຫຼາຍ.

ໃນພິທີໄຂງານ,ທ່ານສະຫວັນຄອນ ຣາຊະມຸນຕີ,ລັດຖະມົນຕີຊ່ວຍວ່າການກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວລາວ,ແລະ ທ່ານຈ້າວຈິ່ນ,ຫົວໜ້າຄະນະ ໂຄສະນາຄະນະພັກແຂວງຢຸນນານຈີນຕ່າງໄດ້ປະກອບຄວາມຄິດຄວາມເຫັນ.

ທ່ານສະຫວັນຄອນກ່າວວ່າ,ງານຄັ້ງນີ້ແມ່ນຈັດຂຶ້ນພາຍໃຕ້ສະພາບການທີ່ສາຍພົວພັນສອງປະເທດຂະຫຍາຍກ້າວສູ່ລວງເລິກເລື້ອຍໆ,ເປັນງານມະຫະກຳແຫ່ງການແລກປ່ຽນວັດທະນະທຳ,ໄດ້ສ້າງບັນຍາກາດອັນເບີກບານ



《ການຟ້ອນນາງງາມ》ເຊິ່ງເປັນບົດຟ້ອນພື້ນເມືອງຂອງລາວ
老挝传统舞蹈《美女舞》

ມ່ວນຊື່ນໃຫ້ແກ່ປະຊາຊົນລາວກໍ່ຄືຈີນຕ່າງດ້າວ ແລະ ເຊື້ອສາຍຈີນຢູ່ລາວ, ໂດຍສະເພາະຈະເຮັດໃຫ້ປະຊາຊົນລາວສຳຜັດເຖິງຄວາມດີງາມຂອງບຸນກຸດຈີນ,ພ້ອມກັນນັ້ນ,ຜ່ານງານຄັ້ງນີ້, ປະຊາຊົນຈີນຈະຮັບຮູ້ວັດທະນະທຳລາວ,ຊຶ່ງຈະຊຸກຍູ້ຄວາມເຂົ້າໃຈ ແລະ ການແລກປ່ຽນລະຫວ່າງປະຊາຊົນສອງຊາດ.

ທ່ານຈ້າວຈິ່ນກ່າວວ່າ,ແຂວງຢຸນນານເປັນແຂວງດຽວຂອງຈີນທີ່ມີຊາຍແດນຕິດກັບປະເທດລາວ.ໃນຊຸມປີມໍ່ໆມານີ້,ພາຍໃຕ້ສະພາບການທີ່ສາຍພົວພັນໄມຕີຈິດ ແລະ ການຮ່ວມມືລະຫວ່າງຈີນລາວເພີ່ມຂຶ້ນເລື້ອຍໆ,



《ສະຫຼອງປີໃໝ່》ບົດຟ້ອນເປີດເວທີ
开场舞《闹新春》



ການນຳຂອງສະພາແຫ່ງຊາດລາວ, ຄະນະໂຄສະນາອົບຮົມສູນກາງພັກລາວ, ກະຊວງຖະແຫຼງຂ່າວວັດທະນະທຳແລະທ່ອງທ່ຽວລາວ, ກະຊວງການຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າຮ່ວມງານລາຕີມ່ວນຊື່ນແບບຄອບຄົວຮ່ວມສະຫຼອງບຸນກຸດຈີນ-ລາວ
老挝国会、中宣部、新闻文化旅游部、外交部及相关部门领导出席“中老情·合家欢”春节联欢晚会

ການໄປມາຫາສູ່ກັນໃນຂົງເຂດຕ່າງໆລະຫວ່າງແຂວງ ຢຸນນານກັບປະເທດລາວກໍ່ໄດ້ເພີ່ມຂຶ້ນ, ຂົງເຂດການຮ່ວມມືເປີດກວ້າງອອກ, ເນື້ອໃນແຫ່ງການຮ່ວມມືກໍ່ເພີ່ມຂຶ້ນ, ໄດ້ປະກອບສ່ວນອັນຕັ້ງໜ້າເຂົ້າໃນການຂະຫຍາຍສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ.

ທ່ານຈ້າວຈິ່ນກ່າວຕື່ມອີກວ່າ, ໂດຍຜ່ານການສະ



ທ່ານເຊີນເວີນຊານປະທານກຸ່ມບໍລິສັດວິສາວະກຳກໍ່ສ້າງຢຸນນານທັງເປັນເລຂາຄະນະພັກໄດ້ຂຶ້ນເວທີໃນງານລາຕີມ່ວນຊື່ນສະແດງຄວາມຢ້ຽມຢາມຖາມຂ່າວປີໃໝ່ຕໍ່ປະຊາຊົນຈີນລາວທັງສອງປະເທດ.
云南省建工集团董事长、党委书记陈文山在晚会上向中老两国人民致以新春问候



ທ່ານເອກອັກຄະລັດຖະທູດຂອງບັນດາປະເທດປະຈຳລາວໄດ້ເຂົ້າຮ່ວມງານລາຕີມ່ວນຊື່ນແບບຄອບຄົວຮ່ວມສະຫລອງງານບຸນກຸດຈີນ-ລາວ.
各国驻老挝大使出席“中老情·合家欢”春节联欢晚会

ແດງຂອງນັກສິລະປິນສອງປະເທດຄັ້ງນີ້, ຈະເພີ່ມທະວີການແລກປ່ຽນ ແລະ ການຮ່ວມມືດ້ານວັດທະນະທຳລະຫວ່າງສອງຝ່າຍ, ໃຊ້ແສງສະຫວ່າງສິລະປະວັດທະນະທຳ, ເຍືອງຮຸ່ງເສັ້ນທາງສະແຫວງຫາຄວາມໃຝ່ຝັນຂອງປະຊາຊົນສອງຊາດທີ່ຮ່ວມມືພັດທະນາ ແລະ ຈະເລີນຮຸ່ງເຮືອງພ້ອມກັນ; ໃຊ້ຄວາມງາມຂອງສິລະປະວັດທະນະທຳ, ຂຽນບົດໃໝ່ແຫ່ງມິດຕະພາບລະຫວ່າງປະຊາຊົນສອງຊາດ.

ໃນເວລາໃຫ້ສຳພາດຕໍ່ນັກຂ່າວ, ທ່ານບຸນຈອມ, ຜູ້ອຳນວຍການໃຫຍ່ໂທລະພາບແຫ່ງຊາດລາວກ່າວວ່າ, ລາຍການໃນງານຄັ້ງນີ້ດີຫຼາຍ, ເຮັດໃຫ້ປະຊາຊົນສອງຊາດຈີນລາວທີ່ບໍ່ເຄີຍໄປປະເທດຂອງກັນນັ້ນໄດ້ມີຄວາມຮັບ




ສະຖານທີ່ງານລາຕີມ່ວນຊື່ນ
晚会现场



ການນຳທີ່ກ່ຽວຂ້ອງຂອງສະມາຄົມຈີນນະຄອນຫຼວງວຽງຈັນແລະການນຳຊາວຈີນຕ່າງດ້າວໄດ້ຊົມເບິ່ງການສະແດງທີ່ຍອດຢ້ຽມໃນງານລາຕີ.
老挝万象中华理事会有关领导和侨领观看晚会上的精彩演出

ຮູ້ເພີ່ມຂຶ້ນ.ພ້ອມກັນນັ້ນ, ໂດຍຜ່ານການຮ່ວມມືຄັ້ງນີ,ຍັງໄດ້ຖອດຖອນບົດຮຽນທີ່ດີນຳເພື່ອນຮ່ວມງານຂະແໜງໂທລະພາບຂອງຈີນ,ນີ້ຈະມີຜົນດີຕໍ່ການຍົກລະດັບຜະລິດລາຍການໂທລະພາບຂອງລາວ.

ນາງປາ,ຊາວນະຄອນຫຼວງວຽງຈັນຜູ້ໜຶ່ງບອກນັກຂ່າວວ່າ,ບໍ່ເຄີຍຊົມລາຍການສິລະປະຈີນທີ່ມ່ວນແບບນີ້ຈັກເທື່ອ,ຮູ້ສຶກວ່າໄດ້ເປີດຫູເປີດຕາ, ໂດຍສະເພາະມີຄວາມຮັບຮູ້ໂດຍກົງກ່ຽວກັບບຸນກຸດຈີນເປັນຄັ້ງທຳອິດ.ປະຈຸບັນ,ມີຄົນລາວຈຳນວນໜຶ່ງກໍ່ມັກຫ້ອຍໂຄມໄຟ ແລະ ຕິດຕົວໜັງສື“ 福 -ຄວາມສຸກ”ໃນຍາມບຸນກຸດຈີນ,ນາງກັບໄປແລ້ວກໍຈະໄປຊື້ຕົວໜັງສື“ 福 -ຄວາມສຸກ”ມາຕິດໃສ່ເຮືອນ.

ງານຄັ້ງນີ້ໄດ້ຖ່າຍທອດສົດໂດຍໂທລະພາບແຫ່ງຊາດລາວ,ແລະ ອອກອາກາດຢູ່ໂທລະພາບຜ່ານດາວທຽມແຂວງຢຸນນານໃນຕອນຄ່ຳວັນທີ 27 ມັງກອນ.



ທ່ານ ຈາວຈິ່ນ ກຳມະການປະຈຳຄະນະພັກແຂວງ,ຫົວໜ້າໂຄສະນາຄະນະພັກແຂວງຢຸນນານພັກຄອມມູນິດຈີນ ແລະ ການນຳຂອງສະຖານທູດຈີນປະຈຳລາວ,ສະພາແຫ່ງຊາດລາວ,ຄະນະໂຄສະນາອົບຮົມສູນກາງພັກລາວ,ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວລາວ,ກະຊວງການຕ່າງປະເທດ ແລະ ເປັນຕົ້ນໄດ້ຖ່າຍຮູບຮ່ວມກັນກັບພະນັກງານ,ນັກສະແດງພາຍຫລັງການສະແດງສິ້ນສຸດລົງແລ້ວ.
中共云南省委常委、省委宣传部部长赵金和中国驻老挝大使馆、老挝国会、中宣部、新闻文化旅游部、外交部等领导在演出结束后与演职人员合影



《ດອກຈຳປາ》ບົດຟ້ອນມູນເຊື້ອລາວ
老挝传统舞蹈《占芭花》

文、图 / 彭正华

# ສະຖານທູດຈີນປະຈຳລາວໄດ້ຈັດງານຮ່ວມສະເຫຼີມສະຫຼອງບຸນກຸດຈີນປີ 2014

## 中国驻老挝大使馆举行 2014 新春招待会

在 2014 年农历马年春节来临之际，中国驻老挝特命全权大使关华兵和夫人于 1 月 22 日晚，在大使馆大厅举行“新春招待联欢晚会”。在老挝的华人华侨、中资企业、留学生及使馆领导和工作人员约 120 人参加了新春招待会。

ເນື່ອງໃນໂອກາດບຸນກຸດຈີນປີ 2014 ວຽນມາເຖິງນີ້,ຕອນຄ່ຳວັນທີ 22 ມັງກອນ 2014,ທ່ານກວນຮວາປີງ,ເອກອັກຄະລັດຖະທູດຈີນປະຈຳລາວພ້ອມພັນລະຍາໄດ້ຈັດງານຮ່ວມສະເຫຼີມສະຫຼອງບຸນກຸດຈີນຢູ່ທີ່ສະຖານທູດຈີນປະຈຳລາວ.

ໃນງານດັ່ງກ່າວ,ທ່ານກວນຮວາປີງກ່າວວ່າ,ຍິນດີຕ້ອນຮັບບັນດາທ່ານເຂົ້າຮ່ວມງານຮ່ວມສະເຫຼີມສະຫຼອງບຸນກຸດຈີນ.ທ່ານໄດ້ແຈ້ງສະພາບການອັນດີງາມຂອງການລົງເລິກການປະຕິຮູບແລະເປີດປະຕູສູ່ພາຍນອກພາຍໃຕ້ການນຳພາຂອງສູນກາງພັກທີ່ມີທ່ານສີຈິນຜິງເປັນເລຂາທິການໃຫຍ່ແຕ່ກອງປະຊຸມໃຫຍ່ຄັ້ງທີ 18 ຂອງພັກຄອມມູນິດຈີນເປັນຕົ້ນມາ,ຜົນສຳເລັດອັນຍິ່ງໃຫຍ່ຂອງສູນກາງພັກໃນການຕໍ່ຕ້ານການສໍ້ລາດບັງຫຼວງ,ການພົວພັນການຕ່າງປະເທດທີ່ປັບປຸງຂະຫຍາຍການພົວພັນທີ່ດີກັບປະເທດໃກ້ຄຽງ, ແລະ ກ່າວຢໍ້າຄວາມຕັດສິນໃຈຂອງລັດຖະບານຈີນໃນການປົກປັກຮັກສາດິນແດນປະເທດຊາດ.ທ່ານທູດກວນຮວາປີງອວຍພອນໃຫ້ຈີນຕ່າງດ້າວເຊື້ອສາຍຈີນຢູ່ລາວ,ວິສາຫະກິດຈີນ,ນັກສຶກສາຈີນ ແລະ ສື່ມວນຊົນຈີນປະຈຳລາວ,ພ້ອມດ້ວຍແຂກທັງຫຼາຍທີ່ຮ່ວມງານຈົ່ງສະບາຍດີປີໃໝ່,ແລະ ປະສົບຜົນສຳເລັດໃນປີໃໝ່.ການປະກອບຄຳເຫັນຂອງທ່ານກວນຮວາປີງໄດ້ຮັບສຽງຕົບມືຢ່າງບໍ່ຢຸດຢັ້ງ.ຫຼັງຈາກນັ້ນ,ທ່ານນາງລີຢຽນຈິ່ນ,ປະທານສະມາຄົມຈີນນະຄອນຫຼວງວຽງຈັນ, ຜູ້ຕາງໜ້າວິສາຫະກິດຈີນ ແລະ ນັກສຶກສາຈີນຕ່າງໄດ້ປະກອບຄວາມຄິດຄວາມເຫັນ, ໂດຍສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນຈີນ,ກໍ່ຄືຄວາມເອົາໃຈໃສ່,ແລະ ການສະໜັບສະໜູນຈາກສະຖານທູດຈີນ,ແລະສົ່ງຄວາມອວຍພອນຕໍ່ກັນ.ພ້ອມກັນນັ້ນ,ຍັງອວຍພອນໃຫ້ປະເທດຊາດອັນຍິ່ງໃຫຍ່ຈົ່ງມີຄວາມຈະເລີນຮຸ່ງເຮືອງ, ແລະ ອວຍພອນໃຫ້ປະຊາຊົນຈີນຈົ່ງມີຄວາມຜາສຸກ!

ໃນງານດັ່ງກ່າວ,ບັນດາທ່ານແຂກທັງຮັບປະທານອາຫານແຊບໆ,ທັງຊົມການສະແດງຂອງທ່ານແຂກນັ້ນເອງ,ບາງຄົນຮ້ອງເພງ,ບາງຄົນເສບດົນຕີ,ຍັງມີການສະແດງສິລະປະຕັດເຈ້ຍ.ໃນງານດັ່ງກ່າວແມ່ນເຕັມໄປດ້ວຍບັນຍາກາດອັນເບີກບານມ່ວນຊື່ນແຕ່ຕົ້ນຈົນຈົບ.ໃນທີ່ສຸດ,ພາຍໃຕ້ການນຳພາຂອງທ່ານທູດກວນຮວາປີງ,ຄົນທັງຫຼາຍໄດ້ລຸກຂຶ້ນຮ້ອງເພງລວມໝູ່“ສັນລະເສີນປະເທດຊາດ”,ສຽງເພງທີ່ສະໜັ່ນຫວັ່ນໄຫວ,ອາລົມທີ່ຕື່ນເຕັ້ນໄດ້ຊຸກຍູ້ໃຫ້ງານຮ່ວມສະເຫຼີມສະຫຼອງບຸນກຸດຈີນເຂົ້າສູ່ຄວາມຟົດຟື້ນທີ່ສຸດ.


ທ່ານເອກອັກຄະລັດຖະທູດກວນຮວາປີງພ້ອມດ້ວຍພັນລະຍາຖ່າຍຮູບກັບແຂກຜູ້ມີກຽດທີ່ມາຮ່ວມງານລ້ຽງຮັບຮອງ
关华兵大使及夫人与莅临招待会嘉宾合影


ທ່ານທູດໃຫຍ່ກວນຮວາປີງກ່າວຄຳອວຍພອນປີໃໝ່
关华兵大使致新春贺词


ທ່ານ ນາງ ແສງເດືອນ(ລີຢຽນຈິ່ນ)ປະທານສະມາຄົມຈີນນະຄອນຫຼວງວຽງຈັນຂຶ້ນກ່າວຄຳປາໄສ
万象中华理事会李燕金理事长讲话


ສະຖານທີ່ສະແດງການຕັດເຈ້ຍ
现场剪纸

文、图 / 彭正华

# ຜົນສຳເລັດໃໝ່ໃນການຮ່ວມມືຈີນລາວ




ທ່ານອາຊາງ ລາວລີ ຮອງນາຍົກລັດຖະມົນຕີລາວແລະທ່ານເອກອັກຄະລັດຖະທູດກວນຮວາປິງຮ່ວມກັນຕັດແຖບຜ້າໃນງານວາງສະແດງຜົນງານ
老挝副总理阿桑・劳里和中国驻老挝大使关华兵共同为成果展剪彩

## 中老合作新成果

由中国驻老挝大使馆、老中合作委员会联合主办的“中老经济合作成果展”于 2014 年 1 月 29 日上午在雄伟壮丽的老挝国家会议中心隆重开幕。

ເນື່ອງໃນໂອກາດບຸນກຸດຈີນປີມະເມຍວຽນມາເຖິງນີ້,ສະຖານທູດຈີນປະຈຳລາວ,ຄະນະກຳມາທິການຮ່ວມມືລາວຈີນໄດ້ຮ່ວມກັນຈັດ“ງານວາງສະແດງຜົນການຮ່ວມມືເສດຖະກິດການຄ້າຈີນລາວ”ຢູ່ຫໍປະຊຸມແຫ່ງຊາດໃນຕອນເຊົ້າວັນທີ 29 ມັງກອນປີ 2014.

ທ່ານອາຊາງ ລາວລີ,ຮອງນາຍົກລັດຖະມົນຕີລາວ,ທ່ານກວນຮວາປິງ,ເອກອັກຄະລັດຖະທູດຈີນປະຈຳລາວ,ພ້ອມດ້ວຍພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງລັດຖະບານລາວ,ພະນັກງານສະຖານທູດຈີນປະຈຳລາວ,ຈີນຕ່າງດ້າວ ແລະ ຄົນເຊື້ອສາຍຈີນຢູ່ລາວ,ວິສາຫະກິດຈີນ,ສື່ມວນຊົນ ແລະ ອື່ນໆທັງໝົດປະມານ 200 ທ່ານໄດ້ເຂົ້າຮ່ວມພິທີໄຂງານ.

ທ່ານກວນຮວາປິງ,ເອກອັກຄະລັດຖະທູດຈີນປະຈຳລາວ,ແລະ ທ່ານວິຈິດ ຊິນດາວົງ,ຮອງປະທານຄະນະກຳມາທິການຮ່ວມມືລາວຈີນຕ່າງໄດ້ປະກອບຄຳເຫັນ. ພວກທ່ານໄດ້ສະແດງຄວາມຊົມເຊີຍຕໍ່ການຈັດງານວາງສະແດງໝາກຜົນແຫ່ງການຮ່ວມມືເສດຖະກິດການຄ້າ





ທ່ານກວນຮວາປິງເອກອັກຄະລັດຖະທູດຈີນປະຈຳລາວຂຶ້ນກ່າວຄຳປາໄສໃນງານວາງສະແດງຜົນງານ
中国驻老挝大使关华兵在成果展上讲话



ທ່ານວິຈິດ ຮອງປະທານຄະນະກຳມະການຮ່ວມມືລາວຈີນຂຶ້ນກ່າວຄຳປາໄສໃນງານວາງສະແດງຜົນສຳເລັດ
老中合作委员会副主席维吉在成果展上讲话

ຈີນລາວອີກເທື່ອໜຶ່ງໃນເວລາທີ່ບຸນກຸດຈີນໃກ້ຈະວຽນມາຮອດ,ໄດ້ຕີລາຄາສູງຕໍ່ຜູ້ນຳ ແລະ ລັດຖະບານສອງປະເທດທີ່ໄດ້ທຳຄວາມພະຍາຍາມຢ່າງບໍ່ລົດລະເພື່ອຊຸກຍູ້ໃຫ້ມິດຕະພາບສອງປະເທດຂະຫຍາຍຕົວຕື່ມອີກ,ແລະສ້າງສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ.ທ່ານກວນຮວາປິງແລະທ່ານວິຈິດ ຊິນດາວົງໄດ້ນຳໃຊ້ຕົວເລກສະຖິຕິອັນລະອຽດເພື່ອແຈ້ງສະພາບການລົງທຶນຂອງຈີນຢູ່ລາວ ແລະ ຜົນສຳເລັດອັນສຳຄັນໃນການຮ່ວມມືສອງຝ່າຍໃນຊຸມປີມໍ່ໆມານີ້.

ໃນງານວາງສະແດງຄັ້ງນີ້ໄດ້ນຳໃຊ້ຮູບພາບຈຳນວນຫຼວງຫຼາຍ, ໂດຍສະແດງໃຫ້ເຫັນເຖິງຜົນປະໂຫຍດອັນໃຫຍ່ຫຼວງທີ່ການຮ່ວມມືເສດຖະກິດການຄ້ານຳມາໃຫ້ປະຊາຊົນສອງຊາດ,ກໍ່ຄືອະນາຄົດອັນສົດໃສ. ທ່ານຮອງນາຍົກອາຊາງ ລາວລີ,ທ່ານທູດກວນຮວາປິງ ແລະ ແຂກທ່ານອື່ນໆໄດ້ຊົມຮູບພາບຕ່າງໆດ້ວຍຄວາມສົນໃຈ.

# ຊ່ອງໂທລະພາບຕ່າງປະເທດຊ່ອງທຳອິດທີ່ອອກອາກາດດ້ວຍພາສາລາວເປີດບໍລິການແລ້ວ

## 老挝首个老语播报外国频道启动

1 月 25 日晚，云南广播电视台国际频道在老挝首都万象举行落地老挝的启动仪式，该频道成为老挝境内第一个使用老挝语播出的外国频道。

ຕອນຄ່ຳວັນທີ 25 ມັງກອນ 2014,ຊ່ອງສາກົນຂອງສະຖານີວິທະຍຸໂທລະພາບຢຸນນານໄດ້ຈັດພິທີເລີ່ມອອກອາກາດຢູ່ນະຄອນຫຼວງວຽງຈັນ,ເຊິ່ງເປັນຊ່ອງຕ່າງປະເທດຊ່ອງທຳອິດທີ່ອອກອາກາດລາຍການດ້ວຍພາສາລາວ.

ໃນງານຮ່ວມສະເຫຼີມສະຫຼອງບຸນກຸດຈີນ-ລາວທີ່ມີກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວລາວ,ຄະນະໂຄສະນາຄະນະພັກແຂວງຢຸນນານເປັນເຈົ້າພາບ, ແລະ ຈັດໂດຍໂທລະພາບແຫ່ງຊາດລາວ ແລະ ສະຖານີວິທະຍຸໂທລະພາບແຂວງຢຸນນານນັ້ນ,ທ່ານບໍ່ແສງຄຳວົງດາລາ,ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວວັດ



ທ່ານຈາວຈິ່ນ(ຊ້າຍມື3)ກຳມະການປະຈຳຄະນະພັກແຂວງ, ຫົວໜ້າໂຄສະນາຄະນະພັກແຂວງຢຸນນານພັກຄອມມູນິດຈີນກຳລັງທ່ຽວຊົມຊ່ອງໂທລະພາບສາກົນຢຸນນານທີ່ວຽງຈັນ.

中共云南省委常委、省委宣传部部长赵金(左三)在万象观看云南卫视国际频道 蓝 天 图

ທະນະທຳ ແລະ ທ່ອງທ່ຽວລາວ,ທ່ານຈ້າວຈິ່ນ,ຫົວໜ້າຄະນະໂຄສະນາຄະນະພັກແຂວງຢຸນນານ,ທ່ານກ່ວນຮວາປິ່ງ,ເອກອັກຄະລັດຖະທູດຈີນປະຈຳລາວ,ນາງລີຊຽນ, ຫົວໜ້າຫ້ອງການໂຄສະນາຕໍ່ຕ່າງປະເທດຂອງແຂວງຢຸນນານໄດ້ຮ່ວມກັນເປີດພິທີເລີ່ມອອກອາກາດຂອງຊ່ອງສາກົນຢຸນນານ.ໃນມື້ເລີ່ມອອກອາກາດ,ຊ່ອງສາກົນຢຸນນານໄດ້ອອກອາກາດລະຄອນໂທລະພາບ“ມູ້ຟູເຟີ່ງຢຸນ” ທີ່ພາກພາສາລາວ,ລາຍການ“ຊຸມສາຍພົວພັນສາມປະເທດຈີນ,ລາວແລະໄທ-ບັນທຶກການເປີດບໍລິການແລ່ນລົດຂອງຮົ້ວມິດຕະພາບຫ້ວຍຊາຍ-ຊຽງຂອງ”,ລາຍການບັນທຶກບຸນພະບາງລາວ,ແລະ ລາຍການອື່ນໆ,ເຊິ່ງໄດ້ເຂົ້າສູ່ສາຍຕາຂອງຄອບຄົວປະຊາຊົນລາວເປັນລ້ານເປັນໂກດ.

ແຂວງຢຸນນານກັບປະເທດລາວມີພູຜາແມ່ນ້ຳຕິດຈອດກັນ,ມີສາຍພົວພັນໄມຕີຈິດມິດຕະພາບຢ່າງເລິກເຊິ່ງ,ປະເທດລາວເປັນປະເທດໜຶ່ງທີ່ມີຊາວຈີນເຊື້ອສາຍຢຸນນານຫຼາຍທີ່ສຸດ.ຄຽງຄູ່ກັບເຂດການຄ້າເສລີຈີນອາຊຽນສ້າງຕັ້ງຂຶ້ນ,ຮົ້ວມິດຕະພາບຫ້ວຍຊາຍ-ຊຽງຂອງສ້າງສຳເລັດ,ທາງຫຼວງຄຸນໝິງ-ບາງກອກເປີດບໍລິການໝົດສາຍ,ຈີນກັບລາວຈະມີການພົວພັນແໜ້ນແຟ້ນກວ່າເກົ່າໃນດ້ານເສດຖະກິດການຄ້າ, ການສຶກສາ,ວັດທະນະທຳ,ການທ່ອງທ່ຽວ,ໄຟຟ້າ,ແລະ ການທະນາຄານ. ຊ່ອງສາກົນຢຸນນານເປີດບໍລິການຢູ່ປະເທດລາວເທື່ອນີ້, ກໍ່ແມ່ນມາດຕະການສຳຄັນອີກຢ່າງໜຶ່ງໃນການແລກປ່ຽນ ແລະ ການຮ່ວມມືລະຫວ່າງສອງຝ່າຍ.

ໃນບຸນກຸດຈີນປີ 2014 ທີ່ວຽນມາເຖິງນີ້,ຫົວໜ້າສະຖານກົງສຸນໃຫຍ່ຂອງ 7 ປະເທດທີ່ຄຸນໝິງ,ຄື:ລາວ,ໄທ, ມຽນມາ,ກຳປູເຈຍ,ຫວຽດນາມ,ມາເລເຊຍ,ບັງກາລາເດັດຕ່າງໄດ້ຜ່ານຊ່ອງສາກົນຢຸນນານອວຍພອນບຸນກຸດຈີນດ້ວຍພາສາຈີນໃຫ້ແກ່ປະຊາຊົນຈີນ,ເພື່ອສົ່ງຄວາມຢື້ຢາມຖາມຂ່າວ ແລະ ຄວາມອວຍພອນຕໍ່ປະຊາຊົນຈີນ. ຊ່ອງສາກົນຢຸນນານຈະຜ່ານຮູບເງົາ,ລະຄອນໂທລະພາບ,ລາຍການບັນເທີງ,ລາຍການສາລະຄະດີ, ແລະ ລາຍການທ່ອງທ່ຽວເປັນຕົ້ນ,ເຜີຍແຜ່ວັດທະນະທຳທີ່ດີງາມຂອງຈີນໄປສູ່ປະເທດຕ່າງໆຢູ່ອາຊີຕາເວັນອອກສ່ຽງໃຕ້ ແລະ ອາຊີໃຕ້.



ບໍລິສັດລາວເຈແລ່ມເຈີຈຳກັດ

老挝成捷企业有限公司







ທ່ານ ຮວງ ຈິນຜູ ປະທານບໍລິສັດ
黄金浦 董事长

ທີ່ຢູ່:ຫຼັກ 8ຖະໜົນທ່າເດື່ອນະຄອນຫຼວງວຽງຈັນ
ເບີໂທ: 856-21-314880
ມືຖື: 856-20-55763908
ແຟກ: 856-21-314882

昆明门市部：昆明市白龙路世博大道387号
豪都家具三楼
电话：13759179402
老挝厂址：老挝万象市塔德路八公里处
电话：856-21-314880
856-20-55763908
传真：856-21-314882











边境口岸行 民生篇




# ຄວາມໄຝ່ຝັນຂອງຈີນ

## ໄປສຳພາດດ່ານຊາຍແດນ ສະບັບຊີວິດການເປັນຢູ່ປະຊາຊົນ



文 / 楚 然 图 /CFP

# ດ່ານພ້ຽນມາແມ່ນ້ຳນູ້ຈ່ຽງ




**怒江片马口岸**

片马口岸是云南怒江州唯一的省级开放口岸，位于泸水县西部，处在中国国家级自然保护区——高黎贡山自然保护区西坡腹地。其南、北、西三面与缅甸接壤，距缅甸密支那仅 220 公里。1991 年 8 月批准为二类口岸对外开放。

ດ່ານພັຽນມາເປັນດ່ານເປີດປະຕູສູ່ພາຍນອກລະດັບແຂວງແຫ່ງດຽວຢູ່ກິ່ງແຂວງນູ້ຈ່ຽງແຂວງຢຸນນານຈີນ, ຕັ້ງຢູ່ພາກຕາເວັນຕົກຂອງເມືອງລູຊຸຍ,ແລະ ຢູ່ພາກກາງເປີ້ນພູຕາເວັນຕົກຂອງເຂດສະຫງວນທຳມະຊາດພູກາວລີກົ້ງ,ທີ່ເປັນເຂດສະຫງວນທຳມະຊາດລະດັບຊາດ.ທິດໃຕ້,ທິດເໜືອ ແລະ ທິດຕາເວັນຕົກຕິດກັບມຽນມາ,ຫ່າງຈາກເມືອງມີຈີນາຂອງມຽນມາພຽງແຕ່ 220 ກິໂລແມັດເທົ່ານັ້ນ.ໃນເດືອນສິງຫາປີ 1991 ໄດ້ຮັບອະນຸມັດເປັນດ່ານເປີດປະຕູສູ່ພາຍນອກປະເພດສອງ.

ຢູ່ພັຽນມາມີຊັບພະຍາກອນການທ່ອງທ່ຽວຢ່າງອຸດົມສົມບູນ,ຢູ່ເຂດທ່ອງທ່ຽວຕາມຊາຍແດນ,ມີປ່າດົງດິບໜາທີ່ອັດສະຈັນ,ມີພູຜານາສວນທີ່ສວຍສົດງົດງາມ,ຢູ່ນີ້




ເສົາຫຼັກເຂດແດນຈີນ
中国国界界桩

ຄວາມສູງກວ່າລະດັບໜ້ານ້ຳທະເລ 1897 ແມັດ,ພິດມີຄວາມແຕກຕ່າງກັນຕາມອາກາດໃນລະດັບຄວາມສູງຕ່າງກັນ,ເປັນດິນຟ້າອາກາດປ່າຝົນແຖບອຸ່ນ.ອານຸສາວະລີວີລະຊົນຕໍ່ຕ້ານອັງກິດພັຽນມາທີ່ຕັ້ງຢູ່ແຫ່ງນີ້,ເປັນຂີດໝາຍທີ່ສະແດງໃຫ້ເຫັນເຖິງປະຊາຊົນເຜົ່າຕ່າງໆຂອງພັຽນມາຕໍ່ຕ້ານກັບຜູ້ຮຸກຮານຕ່າງປະເທດ,ອານຸສາວະລີສູງ 20 ແມັດ,ປະກອບດ້ວຍດາບ 3 ອັນ ແລະ ໂລ້ກຳບັງ 3 ອັນ,ໝາຍເຖິງວີລະກຳຂອງປະຊາຊົນເຜົ່າຕ່າງໆຕໍ່ຕ້ານກັບອັງກິດຜູ້ຮຸກຮານ,ໃນຫໍພິພິທະພັນມີການວາງສະແດງຂໍ້ມູນປະຫວັດສາດຂອງພັຽນມາ.

ເມື່ອເດີນທາງອອກຈາກເທດສະບານເມືອງລູຊຸຍເຂົ້າສູ່ພັຽນມາ,ຢູ່ແຄມທາງມີນ້ຳຕົກຕາດຢືນສ່ານ ແລະ ປາງສ່ານສອງແຫ່ງ,ມີຄວາມສູງໂດນກັນເຖິງ 250 ແມັດ,ສຽງນ້ຳຕົກຕາດດັງກ້ອງສະໜັ່ນໄປທົ່ວບໍລິເວນ,ທັງມີບໍ່ນ້ຳອອກຢັ້ງຢາຍໄປທົ່ວ.ຢູ່ປາກຮ່ອມພູຜີ່ງເຊທີ່ສູງກວ່າລະດັບໜ້ານ້ຳທະເລ 3100 ແມັດ,ຖ້າວ່າໃນຍາມແດດອອກຈະໄດ້ເຫັນທ້ອງຟ້າແຈ່ມໃສ,ອ້ອມດ້ວຍດອກເມກສີຂາວ,ມອງໄປທາງໄກຈະໄດ້ເຫັນພູຜາຢ່າງສະຫງ່າງາມ;ຖ້າວ່າເປັນຍາມຟ້າບົດກໍ່ຈະໄດ້ເຫັນນ້ຳໝອກສີຂາວຢູ່ອ້ອມຮອບ,ຄ້າຍຄືແດນເນລະມິດແຫ່ງສະຫວັນ.

ຢູ່ພັຽນມາມີການຄ້າຕາມຊາຍແດນມາເປັນເວລາດົນນານ,ໃນປີ 1648 ກໍ່ໄດ້ປະກົດຕົວຂຶ້ນແລ້ວ.ນັບແຕ່ຈັດເປັນດ່ານປະເພດສອງໃນປີ 1991 ເປັນຕົ້ນມາ,ອົງການປົກຄອງເມືອງລູຊຸ່ຍໄດ້ໃຊ້ມາດຕະການຕ່າງໆ,ເຊັ່ນ,ເພີ່ມທະວີການກໍ່ສ້າງພື້ນຖານໂຄງລ່າງ,ເປີດກວ້າງໂຄງການຮ່ວມມືການຄ້າຕາມຊາຍແດນ,ແລະໃຊ້ນະໂຍບາຍເສດຖະກິດພິເສດເປັນຕົ້ນ,ດ່ານໄດ້ຮັບການພັດທະນາຢ່າງວ່ອງໄວ.ປະຈຸບັນ, ໂດຍອີງຕາມດ່ານພັຽນມາ,ໄດ້ພັດທະນາກິດຈະການຫຼາຍສິບຢ່າງ,ເຊັ່ນ,ການບຸກເບີກຊັບພະຍາກອນ,ປຸງແຕ່ງໄມ້,ປຸງແຕ່ງຜະລິດຕະພັນກະສິກຳ,ວັດສະດຸກໍ່ສ້າງ,ຕົ້ມກັ່ນເຫຼົ້າ,ພັດທະນາການທ່ອງທ່ຽວ,ແລະ ແຫຼ່ງຜະລິດໝາກຫຸ່ງເປັນຕົ້ນ,ຜະລິດຕະພັນໄດ້ຈຳໜ່າຍເປັນຢ່າງດີທັງພາຍໃນ ແລະ ຕ່າງປະເທດ.ດ່ານພັຽນມາໄດ້ກາຍເປັນປີກໜຶ່ງໃນການກ້າວກະໂດດທາງເສດຖະກິດຂອງກິ່ງແຂວງປົກຄອງຕົນເອງເຜົ່າລີຊູນູ້ຈ່ຽງ,ເປັນປ່ອງເປີດປະຕູສູ່ພາຍນອກທີ່ສຳຄັນຂອງແຂວງຢຸນນານ.





文 / 楚 然 图 / 陈少昆

# ດ່ານເມີ້ງລຽນນະຄອນພູເອີ

## 普洱孟连口岸

孟连口岸地处普洱孟连县西南部，口岸与缅甸掸邦第二特区政府（佤邦）邦康市隔江相望，是中缅两国交往的主要通道，也是中国通往东南亚各国的主要陆路通道之一，1991 年被云南省人民政府批准列为二类口岸。

ດ່ານເມີ້ງລຽນຕັ້ງຢູ່ພາກຕາເວັນຕົກສ່ຽງໃຕ້ຂອງເມືອງເມີ້ງລຽນນະຄອນພູເອີ,ຕິດກັບນະຄອນປາງຄາງເຂດພິເສດທີ 2 ຂອງມຽນມາໂດຍມີແມ່ນ້ຳຂັ້ນໄວ້,ເປັນທາງຜ່ານອັນສຳຄັນລະຫວ່າງຈີນກັບມຽນມາ,ກໍ່ເປັນທາງບົກສຳຄັນລະຫວ່າງຈີນກັບປະເທດອາຊີຕາເວັນອອກສ່ຽງໃຕ້,ປີ 1991 ອົງການປົກຄອງແຂວງຢຸນນານໄດ້ຈັດດ່ານເມີ້ງລຽນເປັນດ່ານປະເພດສອງ,ມີເສັ້ນທາງທາງບົກ 6 ສາຍທີ່ໄດ້ຮັບການອະນຸມັດຈາກອົງການປົກຄອງແຂວງຢຸນນານໄປສູ່ມຽນມາ,ໃນນັ້ນມີທາງຫຼວງອອກເມືອງ 2 ສາຍ,ຄື ເມືອງອາ ແລະ ເມືອງສີນ.

ໃນໄລຍະລາຊະວົງໜິງ ແລະ ລາຊະວົງຊິງ,ເມີ້ງລຽນກໍ່ເປັນປະຕູສຳຄັນແຫ່ງໜຶ່ງຂອງຈີນເພື່ອໄປສູ່ປະເທດຕ່າງໆຂອງອາຊີຕາເວັນອອກສ່ຽງໃຕ້.ເມືອງເມີ້ງລຽນຕິດກັບປະເທດມຽນມາ.ປີ 1991,ອົງການປົກຄອງແຂວງຢຸນນານໄດ້ຈັດເມືອງເມີ້ງລຽນເປັນດ່ານປະເພດສອງ,ຕັ້ງແຕ່ນັ້ນມາ,ເມືອງເມີ້ງລຽນໄດ້ເລັ່ງລັດການພັດທະນາສິ່ງກໍ່ສ້າງພື້ນຖານໂຄງລ່າງ,ພ້ອມທັງສ້າງສະພາບແວດລ້ອມທີ່ກົມກຽວສຳລັບການເປີດປະຕູສູ່ພາຍນອກ



ປະຕູຊາດດ່ານເມືອງລຽນ,ເມືອງປາງຄຳມຽນມາ
孟连口岸、缅甸邦康市国门



ມຸມໜຶ່ງສະໜາມເກັບມ້ຽນສິນຄ້າດ່ານເມືອງລຽນ
孟连口岸查验货场一角

ແລະ ພັດທະນາ,ຈັດວາງ ແລະ ປັບປຸງນະໂຍບາຍພິເສດກ່ຽວກັບເລັ່ງລັດການເປີດປະຕູສູ່ພາຍນອກ,ແລະ ດຶງດູດການລົງທຶນຂອງນັກທຸລະກິດຕ່າງປະເທດ.ປີ 2006,ດ່ານເມີ້ງລຽນໄດ້ຮັບການຈັດເຂົ້າໃນແຜນການພັດທະນາດ່ານເຂົ້າອອກເມືອງໃນ"ແຜນການພັດທະນາ 5 ປີຄັ້ງທີ11"ຂອງລັດ.ຢູ່ທີ່ດ່ານເມີ້ງລຽນມີອາຄານກວດກາ,ສະໜາມກວດກາສິນຄ້າ,ເສັ້ນທາງ,ຂົວ,ດ່ານພາສີ,ແລະເຂດກວດຄຸມນະພາບແລະກວດພະຍາດຢ່າງຄົບຖ້ວນ,ເຊິ່ງໄດ້ບັນລຸມາດຖານກວດກາຮັບຮອງຂອງດ່ານປະເພດໜຶ່ງຂອງລັດ.ການຊື້ຂາຍສິນຄ້າລະຫວ່າງປະຊາຊົນເຂດຊາຍແດນ,ການຄ້າມູນຄ່າໜ້ອຍໄດ້ພັດທະນາເປັນການຄ້າຕາມຊາຍແດນຢ່າງວ່ອງໄວ,ການຄ້າສົ່ງອອກຕໍ່ຕ່າງປະເທດກໍ່ນັບມື້ນັບຈະເລີນຂຶ້ນ.ແຕ່ປີ 1999 ເປັນຕົ້ນມາ,ມູນຄ່າການຄ້າຊາຍແດນຂອງທົ່ວເມືອງເມີ້ງລຽນໄດ້ຫຼາຍກວ່າ 100 ລ້ານຢວນຫຼາຍປີລຽນຕິດ.ສູນການຄ້າຢູ້ອີທີ່ເປັນການລົງທຶນຫຼາຍກວ່າ 100 ລ້ານຢວນຈາກນັກທຸລະກິດຕ່າງປະເທດນັ້ນໄດ້ກາຍເປັນສູນແລກປ່ຽນຄ້າຂາຍສິນຄ້ານ້ອຍຂອງຈີນ,ມຽນມາ,ໄທ,ສິງກະໂປ ແລະ ລາວຢ່າງລວມສູນ,ເຊິ່ງໄດ້ຊຸກຍູ້ໃຫ້ການຄ້າຊາຍແດນຢູ່ດ່ານເມີ້ງລຽນພ້ອມດ້ວຍຕະຫຼາດນັດປະຊາຊົນຊາຍແດນພັດທະນາໄປສູ່ລວງເລິກ ແລະ ກວ້າງອອກ.

ຄະນະພັກແລະອົງການປົກຄອງນະຄອນພູເອີໄດ້ກຳນົດໃຫ້ດ່ານເມີ້ງລຽນຖືການພັດະນາການຄ້າຊາຍແດນ ແລະ ການທ່ອງທ່ຽວເປັນຕົ້ນຕໍ,ມີບົດບາດ 6 ດ້ານ,ຄື:ການຄ້າ,ການທ່ອງທ່ຽວ,ປຸງແຕ່ງສິນຄ້າຂາອອກຂາເຂົ້າ,ສາງສະສົມສິນຄ້າ,ບໍລິການທາງຜ່ານ,ແລະ ບໍລິການທ່ອງທ່ຽວ,ເຊິ່ງເປັນດ່ານເປີດປະຕູທີ່ມີເອກະລັກຊົນເຜົ່າ.ໂອກາດອັນໃໝ່ເຮັດໃຫ້ເມືອງເມີ້ງລຽນໄດ້ຄົ້ນພົບແນວຄິດການພັດທະນາທີ່"ອາໄສເຂດຊາຍແດນ,ນຳໃຊ້ທ່າແຮງຂອງເຂດຊາຍແດນຢ່າງຄ່ອງແຄ້ວ,ສ້າງຄວາມຮັ່ງມີໃຫ້ແກ່ເຂດຊາຍແດນ,ແລະ ສ້າງຄວາມມີສະຖຽນລະພາບໃຫ້ແກ່ເຂດຊາຍແດນ",ແລະ ໄດ້ຄົ້ນຄວ້າເຮັດວຽກໃນການກໍ່ສ້າງດ່ານເມີ້ງລຽນ ແລະ ເຂດຮ່ວມມືເສດຖະກິດຊາຍແດນ.ໂຄງການກໍ່ສ້າງສະໜາມກວດກາສິນຄ້ານຳເຂົ້າ,ໂຄງການກໍ່ສ້າງຮ້ານຍົກເວັ້ນພາສີເມືອງອາ,ໂຄງການສາງສະສົມສິນຄ້າແບບສາທາລະນະ ແລະ ອື່ນໆໄດ້ເລີ່ມນຳໃຊ້ຫຼືມີໝາກຜົນແລ້ວ,ທັງໄດ້ຮັບນະໂຍບາຍພິເສດຕ່າງໆ,ເຊັ່ນ,ພາສີອາກອນ,ການນຳໃຊ້ທີ່ດິນ,ອຳນວຍຄວາມສະດວກໃຫ້ແກ່ການຜ່ານດ່ານ ແລະ ອື່ນໆທີ່ສອດຄ່ອງ ແລະ ຊຸກຍູ້ການພັດທະນາຂອງເຂດຮ່ວມມືເສດຖະກິດຊາຍແດນ.ໄດ້ປັບປຸງສິ່ງກໍ່ສ້າງຄົບຊຸດຂອງຕະຫຼາດນັດຊາຍແດນ,ດ່ານພາສີ,ການກວດຄຸມນະພາບ ແລະ ກວດພະຍາດໄດ້ເຊື່ອມໂຍງເຂົ້າກັບຕະຫຼາດນັດໂດຍກົງ,ເຊິ່ງໄດ້ຫຼຸດຂັ້ນຕອນການຄ້າໃນຕະຫຼາດນັດ,ໄດ້ເພີ່ມເວລາໂມງການສຳລັບການຜ່ານດ່ານ,ເຊິ່ງເປັນຄວາມສະດວກໃຫ້ແກ່ການໄປມາຫາສູ່ກັນຂອງປະຊາຊົນຢູ່ເຂດຊາຍແດນ.




ຕຶກອາຄານກວດກາຮ່ວມກັນທີ່ປະຕູຊາດດ່ານເມືອງລຽນ
孟连口岸国门联检楼

ໂດຍປິ່ນອ້ອມຫົວຂໍ້ທີ່ວ່າ"ດ່ານທອງຄຳ,ພັດທະນາແບບສີຂຽວ",ເມືອງເມີ້ງລຽນພວມສ້າງແລວເສດຖະກິດທີ່ຖືເມືອງເມີ້ງລຽນ,ເມືອງອາ ແລະ ເມືອງສິນເປັນເສັ້ນໃຈກາງ,ເສີມຂະຫຍາຍທ່າແຮງດ້ານດ່ານເຂົ້າອອກເມືອງ,ແລະ ທ່າແຮງທາງຜ່ານໃຫ້ກາຍເປັນທ່າແຮງດ້ານເສດຖະກິດ ແລະ ການພັດທະນາ,ກ້າວໄປສູ່ເປົ້າໝາຍຍຸດທະສາດເພື່ອພັດທະນາເປັນເມືອງດ່ານທີ່ເຂັ້ມແຂງດ້ານເສດຖະກິດ.

图 / 新华社

# ສະຖາບັນຂົງຈື້ແຈກຢາຍຢູ່ໃນທົ່ວໂລກ

## 孔子学院遍全球

从 2004 年世界上第一所孔子学院成立至今，全球 120 个国家和地区已在大学建立了 440 所孔子学院，在 646 所中小学建立了孔子课堂，注册学员达 85 万人，举办各类文化活动 2 万多场。

ນັບແຕ່ສະຖາບັນຂົງຈື້ແຫ່ງທຳອິດສ້າງຕັ້ງຂຶ້ນໃນປີ 2004 ມາຮອດປະຈຸບັນນີ້,ຢູ່ໃນ 120 ປະເທດ ແລະ ເຂດແຄວ້ນຂອງໂລກໄດ້ສ້າງຕັ້ງສະຖາບັນຂົງຈື້ 440 ແຫ່ງໃນມະຫາວິທະຍາໄລ,ສ້າງຫ້ອງຮຽນຂົງຈື້ຢູ່ໂຮງຮຽນມັດທະຍົມ ແລະ ໂຮງຮຽນປະຖົມ 646 ແຫ່ງ,ມີນັກຮຽນທີ່ຂຶ້ນທະບຽນ 8 ແສນ 5 ໝື່ນກວ່າຄົນ,ຈັດກິດຈະກຳວັດທະນະທຳປະເພດຕ່າງໆ 2 ໝື່ນກວ່າຄັ້ງ.

ສະຖາບັນຂົງຈື້ບໍ່ແມ່ນມະຫາວິທະຍາໄລແບບທົ່ວໄປ, ຫາກແມ່ນອົງການສຶກສາ ແລະ ແລກປ່ຽນວັດທະນະທຳເພື່ອເຜີຍແຜ່ພາສາຈີນ ແລະ ສົ່ງເສີມວັດທະນະທຳຈີນ,ເປັນອົງການສາທາລະນະປະໂຫຍດສັງຄົມທີ່ບໍ່ຫວັງຜົນກຳໄລ.ທຳມະດາຕັ້ງຢູ່ໃນມະຫາວິທະຍາໄລ ແລະ




ວັນທີ 9 ເດືອນ 4 ປີ 2013,ສະຖາບັນຂົງຈື້ມະຫາວິທະຍາໄລໂກລຸມບີອາເມລິກາໄດ້ຈັດພິທີເປີດປ້າຍ
2013 年 4 月 9 日，美国哥伦比亚大学孔子学院举行揭牌仪式





ວັນທີ 26 ເດືອນ 1 ປີ 2013, ສະຖາບັນຂົງຈື້ຮົງກົງໄດ້ຈັດກິດຈະກຳສຳຫລວດວັດທະນະທຳຈີນຄັ້ງປະຖົມມະເລີກ
2013 年 1 月 26 日，香港孔子学院首次举办中国文化考察活动

ອົງການສຶກສາປະເພດຄົ້ນຄວ້າຂອງຕ່າງປະເທດ;ໜ້າທີ່ວຽກງານສຳຄັນທີ່ສຸດຂອງສະຖາບັນຂົງຈື້ກໍ່ແມ່ນສະໜອງປື້ມຮຽນພາສາຈີນທີ່ເປັນແບບແຜນ ແລະ ມີອິດທິພົນສູງສຸດໃຫ້ແກ່ຜູ້ຮຽນພາສາຈີນໃນໂລກ; ແລະ ເປີດຊ່ອງທາງແຫ່ງສະຖານທີ່ໃນການຮຽນພາສາຈີນທີ່ສຳຄັນ ແລະ ເປັນລະບົບມາດຕະຖານທີ່ສຸດ.

ວັນທີ 8 ທັນວາປີ 2013,ໃນກອງປະຊຸມໃຫຍ່ສະຖາບັນຂົງຈື້ຄັ້ງທີ 8 ທີ່ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ,ທ່ານນາງລິວຢຽນຕົ່ງ,ກຳມະການກົມການເມືອງສູນກາງພັກ,ຮອງນາຍົກລັດຖະມົນຕີຈີນໄດ້ກ່າວຄຳປາໄສ ແລະ ທວນຄືນເຖິງປະຫວັດການພັດທະນາຂອງສະຖາບັນຂົງຈື້.ເພິ່ນກ່າວວ່າ,ສະຖາບັນຂົງຈື້ຈາກບໍ່ມີຮອດມີ,ຈາກນ້ອຍຮອດໃຫຍ່,ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການຕອບສະໜອງຄວາມຕ້ອງການຮຽນພາສາຈີນຂອງປະຊາຊົນປະເທດຕ່າງໆ,ເພີ່ມທະວີຄວາມເຂົ້າໃຈ ແລະ ມິດຕະພາບລະຫວ່າງປະຊາຊົນຈີນກັບຕ່າງປະເທດ. ທ່ານນາງຊີ້ອອກວ່າ,ວັນທີ 30 ພຶດສະພາປີ 2013,ທ່ານປະທານສີຈິ້ນຜິງໄດ້ສົ່ງຈົດໝາຍຊົມເຊີຍສະຖາບັນຂົງຈື້ຢູ່ໂຮງຮຽນເດວິສທີ່ເປັນສາຂາມະຫາວິທະຍາໄລລັດກາລີໂຟເນຍອາເມລິກາສ້າງຕັ້ງຂຶ້ນ.ໃນຈົດໝາຍຊົມເຊີຍ, ທ່ານປະທານສີຈິ້ນຜິງຊີ້ອອກວ່າ,ການຮັບຮູ້ ແລະ ຮ່ຳຮຽນພາສາ ແລະ ວັດທະນະທຳຂອງຕ່າງປະເທດ,ມີຜົນດີຕໍ່ການເພີ່ມທະວີຄວາມເຂົ້າໃຈ ແລະ ມິດຕະພາບລະຫວ່າງປະຊາຊົນ,ຊຸກຍູ້ການຂະຫຍາຍຕົວຂອງການພົວພັນລະຫວ່າງຊາດ,ຫວັງວ່າອົງການທີ່ກ່ຽວຂ້ອງຈະຮ່ວມມືກັນຢ່າງໃກ້ຊິດ,ພັດທະນາສະຖາບັນຂົງຈື້ໃຫ້ດີ,ປະກອບສ່ວນຢ່າງຕັ້ງໜ້າເພື່ອຊຸກຍູ້ການແລກປ່ຽນດ້ານການສຶກສາວັດທະນະທຳ,ແລະ ການຂະຫຍາຍຕົວຂອງການພົວພັນລະຫວ່າງຊາດ.ຈົດໝາຍຊົມເຊີຍຂອງທ່ານປະທານສີຈິ້ນຜິງ,ບໍ່ພຽງແຕ່ແມ່ນຄວາມອວຍພອນທີ່ດີງາມຕໍ່ສະ

ຖາບັນຂົງຈື້ປະຈຳມະຫາວິທະຍາໄລລັດກາລີໂຟເນຍສາຂາເດວິສເທົ່ານັ້ນ,ຍັງເປັນການໃຫ້ກຳລັງໃຈ ແລະ ຄວາມປາຖະໜາຕໍ່ສະຖາບັນຂົງຈື້ທັງໝົດ.

ເມື່ອ 3 ປີກ່ອນ,ທ່ານອິບລີອານ ຄັງສີຕັນຕິນ,ຜູ້ອຳນວຍການໃຫຍ່ສະຖາບັນຂົງຈື້ປະຈຳມະຫາວິທະຍາໄລຊີບີອູລູຊອຣນ ປູລາກາຂອງຣູມານີໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ສະຖາບັນຂົງຈື້ ແລະ ວິເຄາະສະພາບການນຳໃຊ້ພາສາຂອງໂລກ, ໂດຍມີຜົນສະຫຼຸບວ່າ“ ພາສາອັງກິດຮັກສາລະດັບຄືເກົ່າ,ພາສາເຢຍລະມັນ,ພາສາແອັດສະປາຍ,ພາສາຝຣັ່ງຫຼຸດລົງ,ພາສາຈີນເພີ່ມຂຶ້ນ”,ແລະ ຄາດວ່າ,ພາສາຈີນຈະກາຍເປັນພາສາທົ່ວໂລກ. ໃນກອງປະຊຸມໃຫຍ່ສະຖາບັນຂົງຈື້ປີນີ້,ທ່ານບໍ່ພຽງແຕ່ໄດ້ນຳເອົາຂໍ້ມູນທີ່ເປັນບ່ອນອີງຂອງທັດສະນະຂອງຕົນເທົ່ານັ້ນ,ຍັງໄດ້ຊອກຄົ້ນຢ່າງຕັ້ງໜ້າໃນດ້ານການປັບປຸງຮູບການຄຸ້ມຄອງສະຖາບັນຂົງຈື້,ແລະ ຍົກສູງປະສິດທິພາບໃນການຈັດກິດຈະກຳຂອງສະຖາບັນຂົງຈື້.ຕາມການແນະນຳວ່າ,ສະຖາບັນຂອງຈື້ທີ່ມີທ່ານເປັນຜູ້ອຳນວຍການນັ້ນໄດ້ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງຂອງຈີນ,ພວມຈັດວາງ“ປຶ້ມຄູ່ມືແຫ່ງການຄຸ້ມຄອງຄຸນນະພາບຂອງສະຖາບັນຂົງຈື້”,ເຊິ່ງຈະເຜີຍແຜ່ໃນທົ່ວໂລກ.ກອງປະຊຸມໃຫຍ່ຄັ້ງນີ້ຍັງໄດ້ມອບລາງວັນໃຫ້ແກ່ສະຖາບັນຂົງຈື້ດີເດັ່ນ 28 ແຫ່ງ,ບຸກຄົນດີເດັ່ນ 30 ຄົນ,ແລະ ໂຮງຮຽນຮ່ວມມືກັບຝ່າຍຈີນ 10 ແຫ່ງທີ່ດີເດັ່ນ.

ພາຍໃຕ້ການນຳພາ ແລະ ຜົນສະທ້ອນຈາກສະຖາບັນຂົງຈື້,ຄວາມນິຍົມຮຽນພາສາຈີນໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງຢູ່ໃນທົ່ວໂລກ.ພຽງແຕ່ປີ 2012 ປີດຽວເທົ່ານັ້ນ,ກໍ່ໄດ້ມີ 7 ປະເທດ,ເຊັ່ນ,ອັງກິດ,ຊູແອັດເປັນຕົ້ນໄດ້ປະກາດລັດຖະດຳລັດ ແລະ ນິຕິບັນຍັດ ແລະ ຮູບການອື່ນໆ,ຈັດການສອນພາສາຈີນເຂົ້າໃນລະບົບການສຶກສາ,ປະເທດທີ່ຈັດການສອນພາສາຈີນເຂົ້າໃນລະບົບການສຶກສານັ້ນມີເຖິງ 40 ກວ່າປະເທດແລ້ວ.


ຜູ້ອາສາສະໝັກຂອງສະຖາບັນຂົງຈື້ກຳລັງຮຽນເຮັດກ້ຽວຢູ່
孔子学院志愿者在学习包饺子





# ບໍລິສັດຂົວທາງຫຸ້ນສ່ວນຢຸນນານຈຳກັດ
## 云南路桥股份有限公司

ນິຕິບຸກຄົນຂອງບໍລິສັດ: ທ່ານ ລູ ຊືເຈີ ປະທານບໍລິສັດຜູ້ອຳນວຍການໃຫຍ່
公司法定代表人：鲁仕泽 董事长、总经理


鲁班奖

ບໍລິສັດຂົວທາງຫຸ້ນສ່ວນຢຸນນານຈຳກັດມີທຶນຈົດທະບຽນຈຳນວນ 350 ລ້ານຢວນ,ມີໃບອະນຸຍາດດຳເນີນທຸລະກິດຢູ່ຕ່າງປະເທດ,ມີຄຸນສົມບັດຊັ້ນ 1 ໃນການຮັບເໝົາກໍ່ສ້າງໂຄງການເສັ້ນທາງໂດຍລວມ(EPC) ແລະ ຄຸນສົມບັດຊັ້ນ 1 ໃນການຮັບເໝົາກໍ່ສ້າງພື້ນທາງ,ໜ້າທາງ,ຂົວ,ອຸໂມງ,ຄຸນສົມບັດຊັ້ນສອງໃນການຮັບເໝົາກໍ່ສ້າງກິດຈະກຳທາງລົງຈອດສະໜາມບິນ ແລະ ຄຸນສົມບັດຊັ້ນສອງຮັບເໝົາລວມໂຄງການວິສາວະກຳເທດສະບານ,ເປັນວິສາຫະກິດກໍ່ສ້າງຫລັກແຫລ່ງໃນລະບົບຄົມມະນາຄົມແຂວງຢຸນນານແຫ່ງປະເທດຈີນ.

ຂະແໜງການທຸລະກິດຂອງບໍລິສັດ: ກໍ່ສ້າງ ແລະວັດແທກໂຄງການທາງຫຼວງ,ຂົວ,ອຸໂມງ,ຊົນລະປະທານ, ໂຄງການຜັງເທືອງ,ເຄຫະສະຖານ ແລະ ອື່ນໆ,ຄົ້ນຄວ້າປະດິດສ້າງ ແລະ ນຳໃຊ້ວັດສະດຸໃໝ່,ຄົ້ນຄວ້າປະດິດສ້າງ ແລະ ພັດທະນາລະບົບຕິດຕາມຄວບຄຸມເສັ້ນທາງ; ລົງທຶນໃສ່ວິສະວະກຳຊີວະພາບ,ເຄຫະສະຖານທີ່ດິນ,ພະລັງງານໄຟຟ້າ,ການທ່ອງທ່ຽວ,ຮັກສາສິ່ງແວດລ້ອມ ແລະ ຊັບສິນຂໍ້ມູນຂ່າວສານ; ຮັບເໝົາໂຄງການກໍ່ສ້າງເສັ້ນທາງຢູ່ຕ່າງປະເທດ ແລະ ໂຄງການປະມູນສາກົນພາຍໃນປະເທດກໍ່ຄືການສົ່ງອອກເຄື່ອງອຸປະກອນ ແລະ ວັດສະດຸຂອງໂຄງການຢູ່ຕ່າງປະເທດດັ່ງກ່າວທີ່ຕ້ອງການນັ້ນ; ຈັດສົ່ງພະນັກງານ,ຄົນງານປະຕິບັດໂຄງການຢູ່ຕ່າງປະເທດດັ່ງກ່າວທີ່ຕ້ອງການ.ໃນປະຈຸບັນບໍລິສັດມີພະນັກງານພະລາກອນ1557 ຄົນ,ວິຊາການປະເພດຕ່າງໆ 616 ຄົນ.ມີເຄື່ອງອຸປະກອນກໍ່ສ້າງ ແລະ ກວດກາວັດແທກປະເພດຕ່າງໆລວມ 1000 ກວ່າເຄື່ອງ/ຊຸດ.ນັບແຕ່ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນມາ,ໄດ້ສ້າງເສັ້ນທາງທຸກຊັ້ນລະດັບລວມ4000 ກວ່າກິໂລແມັດ,ໃນນັ້ນເສັ້ນທາງດ່ວນ 300 ກວ່າກິໂລແມັດ,ຂົວປະເພດຕ່າງໆຂະໜາດໃຫຍ່ ແລະ ຂະໜາດກາງມີ 300 ກວ່າແຫ່ງ.


老挝人民民主共和国友谊勋章证书

ບໍລິສັດຖືຄຸນນະພາບເປັນຊີວິດຂອງວິສາຫະກິດ,ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງໂດຍສັງລວມທັງຄຸນນະພາບ,ສິ່ງແວດລ້ອມ ແລະ ຄວາມປອດໄພສຸກຂະພາບທາງອາຊີບ.ອັດຕາຖືກມາດຕະຖານຂອງໂຄງການຮັບເໝົາກໍ່ສ້າງແມ່ນ 100%,ມີຫລາຍໂຄງການໄດ້ຮັບລາງວັນວິສະວະກຳດີເລີດຊັ້ນກະຊວງ ແລະແຂວງແລະ“ລາງວັນຫລຽນເງິນ”ວິສະວະກຳດີເລີດແຫ່ງຊາດ.ໃນນັ້ນເສັ້ນທາງດ່ວນຄຸນມິງຫາຢູຊີໄດ້ຮັບກຽດເປັນ“ລາງວັນຊ່າງຫລູປັນ”ລາງວັນວິສະວະກຳດີເລີດແຫ່ງຊາດຂອງໂຄງການກໍ່ສ້າງປະເທດຈີນສົກປີ 2002; ໂຄງການກໍ່ສ້າງຂົວທາງຕາມເສັ້ນທາງຄຸນມິງ-ບາງກອກຕອນບໍ່ເຕັນຫານ້ຳລຸນໃນປະເທດລາວທີ່ ສປ ຈີນຊ່ວຍເຫລືອກໍ່ສ້າງໃນປີ 2004 ຖືກປະເມີນເປັນວິສະວະກຳທີ່ດີຈາກກະຊວງການຄ້າຂອງຈີນ ແລະ ຈາກກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ,ພ້ອມທັງໄດ້ຮັບ“ຫລຽນໄຊມິດຕະພາບ”ຈາກລັດຖະບານລາວ.


老挝人民民主共和国友谊勋章

云南路桥股份有限公司注册资本35000万元人民币，具有对外经营许可证、公路工程施工总承包壹级资质及路基、路面、桥梁、隧道专业承包壹级资质、机场场道工程专业承包贰级和市政公用工程施工总承包贰级资质，是中国云南省交通系统骨干施工企业。

公司的经营范围：公路、桥梁、隧道、水利、市政、房屋等工程建筑以及工程测绘，新材料的研制与应用、道路监控系统的研制与开发；对生物工程、房地产、电力、旅游、环保、信息产业的投资；承包境外公路工程和境内国际招标工程以及上述境外工程所需的设备、材料出口；对外派遣实施上述境外工程所需的劳务人员。公司现有员工1557人，各类专业技术人员616人。拥有各类专业施工及检测设备共1000余台/套。自公司成立以来，共修建各种等级公路4000余公里，其中高速公路近300公里，各类大中型桥梁300余座。

公司视质量为企业的生命，相继通过了质量、环境、职业安全健康综合管理体系认证。所承建的工程项目合格率为100%，多项工程获得省部级优质工程奖和国家优质工程“银质奖”。其中昆明至玉溪高速公路荣获2002年度中国建筑工程“鲁班奖”（国家优质工程奖）；2004年代表中华人民共和国援建的昆曼公路老挝境内磨丁至楠伦桥段工程被国家商务部和老挝交通运输建设邮电部评为优良工程，并被老挝政府授予“友谊勋章”。



ລຽນກາຫລູປັນປັດຕະສະຍາກຳຈີນ
中国建筑工程鲁班奖奖牌(2002年)

ນິຕິບຸກຄົນຂອງບໍລິສັດ: ຫລູຊືເຈີ ປະທານສະພາບໍລິຫານ,ຜູ້ອຳນວຍການໃຫຍ່
ທີ່ຢູ່ບໍລິສັດ: ເລກ 185 ຖະໜົນປາວໄຮເມືອງກວນຕູ້ນະຄອນຄຸນມິງແຂວງຢຸນນານ ສປ ຈີນ
ໂທລະສັບ: (+86) 871—67168668 67163188
ແຟັກ: (+86) 871—67161702 67161249
ລະຫັດໄປສະນີ: 650200
ເວັບໄຊ : WWW.YNLQ.COM.CN
ອີເມລ: YNLQ@YNLQ.COM.CN

公司法定代表人：鲁仕泽 董事长、总经理
公 司 地 址：云南省昆明市官渡区宝海路185号 邮 政 编 码：650200
联系电话：(+86)871—67168668 67163188 传 真：(+86)871—67161702 67161249
网 址：WWW.YNLQ.COM.CN E—mail: YNLQ@YNLQ.COM.CN

图 / 楚 然

# ປະຊາຊົນປັກກິ່ງຊົມໃຊ້ການບໍລິການຂອງອົງການປົກຄອງໂດຍຜ່ານອິນເຕີເນັດ

## 北京市民点击鼠标 “找政府”

申请结婚登记、经济适用房排队、企业工商注册、办理医保费用报销……这些北京居民原本需要跑上多个政府部门的民生要事,从 2014 年起可以通过政府网上公共服务平台实现 “一站式” 搞定，不用出门就能反映问题；政府的工作人员也可以不用坐在办公室守着电话，而是通过手机等移动设备便可对责任区域进行实时监控。

ຂຶ້ນທະບຽນແຕ່ງງານ,ເຂົ້າແຖວເພື່ອຮ້ອງຂໍເຮືອນຢູ່ແບບປະກັນສັງຄົມ,ຂຶ້ນທະບຽນວິສາຫະກິດ,ຖອນເອົາຄ່າປິ່ນປົວຄືນ...ວຽກເຫຼົ່ານີ້,ປະຊາຊົນປັກກິ່ງຕ້ອງການໄປຫາຫຼາຍພາກສ່ວນ,ນັບແຕ່ປີ 2014 ເປັນຕົ້ນໄປ,ສາມາດແກ້ໄຂແບບປະຕູດຽວໂດຍຜ່ານຈາກເວທີບໍລິການສາທາລະນະໃນເວັບໄຊລັດຖະບານ,ບໍ່ຕ້ອງອອກປະຕູເຮືອນກໍ່ສາມາດສະເໜີບັນຫາໄດ້; ພະນັກງານລັດຖະບານກໍ່ບໍ່ຈຳເປັນຕ້ອງເຝົ້າຢູ່ໃນຫ້ອງການ,ຫາກແມ່ນຕິດຕາມໃນທຸກເວລາຕໍ່ບໍລິເວນຮັບຜິດຊອບໂດຍຜ່ານໂທລະສັບມືຖື ຫຼື ອຸປະກອນເຄື່ອນທີ່ອື່ນໆ.

ເມື່ອເຕັກໂນໂລຊີຂໍ້ມູນຂ່າວສານທາງອິນເຕີເນັດໄດ້ຖືກນຳໃຊ້ເຂົ້າໃນການບໍລິການສາທາລະນະຂອງລັດຖະບານແລ້ວ,ປະຊາຊົນຈະໄດ້ຮັບຄວາມສະດວກຫຍັງແດ່?

ນັກຂ່າວໄດ້ເຫັນວ່າ,ເມື່ອເຂົ້າສູ່ເວັບໄຊການບໍລິການເຂດຊຸມຊົນພາກຕາເວັນຕົກປັກກິ່ງແລ້ວ,ມີລາຍການຕ່າງໆຢ່າງຄົບຖ້ວນ,ເຊັ່ນ,ການອອກລູກ,ການສຶກສາ,ການເຮັດວຽກ,ການບຳນານ,ການປະກັນສັງຄົມ,ການຂຶ້ນທະບຽນບໍລິສັດ,ການດຳເນີນງານຂອງວິສາຫະກິດຂະໜາດກາງ ແລະ ນ້ອຍ,ດັ່ງນີ້ເປັນຕົ້ນ,ຜູ້ກ່ຽວຂຶ້ນທະບຽນເຂົ້າເວັບໄຊແລ້ວກໍ່ສາມາດໂຫຼດໃບສະເໜີທີ່ຕົວເອງຕ້ອງການ,ນັດເວລາທາງເວັບໄຊ,ແລະ ພິຈາລະນາທາງເວັບໄຊ.ຕົວຢ່າງວ່າ,ຖ້າຢາກເຮັດໃບບໍລິການກ່ຽວກັບການເກີດລູກ,ຫຼັງຈາກປະກອບເອກະສານສະເໜີ,ແລະ ສະເໜີການພິຈາລະນາທາງເວັບໄຊແລ້ວ,ຈະໄດ້ຮັບຂໍ້ຄວາມສັ້ນສະບັບໜຶ່ງ,ແລ້ວກໍ່ຈະໄດ້ໄປປະກອບເອກະສານທີ່ກ່ຽວຂ້ອງຢູ່ຕາມທີ່ຢູ່ຂອງອົງການປົກຄອງ ແລະ ຕາມເວລາທີ່ນັດໄວ້ທາງເວັບໄຊ.

ປະຈຸບັນ,ນະຄອນຫຼວງປັກກິ່ງກຳລັງຊຸກຍູ້ການກໍ່ສ້າງລະບົບຕາໜ່າງຄຸ້ມຄອງການບໍລິການສັງຄົມຢ່າງຮອບດ້ານ, ໂດຍໄດ້ທົ່ວເຖິງໄປຕາມຖະໜົນ ແລະ ຕາແສງທີ່ກວມເອົາເຖິງ 75,3%,ເຂດຊຸມຊົນ ແລະ ບ້ານ 70,4%.ທ່ານຊົງກຸ້ຍລຸນກ່າວວ່າ,ຈະຍາດແຍ່ງໃຫ້ສຳເລັດເປົ້າໝາຍທີ່ປົກຫຸ້ມໄປຕາມເຂດຖະໜົນ,ເຂດຊຸມຊົນທັງໝົດກ່ອນທ້າຍປີ 2013,ແລະ ເລັ່ງລັດການພັດທະນາຢູ່ເຂດຊົນນະບົດ.

ປະຊາຊົນປັກກິ່ງເປີດໂທລະສັບມືຖື,ກໍ່ສາມາດໄດ້ຮັບການບໍລິການສາທາລະນະທີ່ຕົວເອງຕ້ອງການໃນທຸກທີ່ທຸກເວລາ,ສຳລັບພະນັກງານພາກສ່ວນລັດຖະບານກໍ່ສາມາດຜ່ານອຸປະກອນເຄື່ອນທີ່ຂອງຕົນ,ດຳເນີນການຕິດຕາມຄຸ້ມຄອງຕໍ່ເຂດບໍລິເວນທີ່ຮັບຜິດຊອບ.ຜູ້ຊ່ຽວຊານກ່າວວ່າ,ນີ້ເປັນຄວາມມີປະສິດທິຜົນຕົວຈິງທີ່ນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ.

ໃນຂະບວນການທີ່ອົງການປົກຄອງຍ້າຍການບໍລິການສາທາລະນະຂຶ້ນສູ່ເວັບໄຊນັ້ນ,ເມືອງຊາວຢາງຂອງນະຄອນຫຼວງປັກກິ່ງໄດ້ສ້າງ“ເວັບໄຊບໍລິການຊາວຢາງ”ຕາມທັດສະນະທີ່ວ່າ“ຕົວເມືອງທີ່ມີສະຕິປັນຍາ”.ພະນັກງານຫ້ອງການຂໍ້ມູນຂ່າວສານເມືອງຊາວຢາງໃຫ້ຮູ້ວ່າ,ໂດຍຜ່ານການສ້າງເວທີທາງເວັບໄຊນີ້,ນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານສ້າງລະບົບບໍລິການແບບດີຈີຕອນ ແລະ ລະບົບການບໍລິການວຽກງານການປົກຄອງທີ່ຖືພົນລະເມືອງເປັນໃຈກາງ,ສາມາດແກ້ໄຂບັນຫາການຄຸ້ມຄອງຕ່າງໆ,ເຊັ່ນ,ນ້ຳ,ຄົມມະນາຄົມ,ຄວາມປອດໄພສາທາລະນະ, ພະລັງໄຟຟ້າ,ແລະ ສິ່ງກໍ່ສ້າງເປັນຕົ້ນ.



图 / 老挝驻上海总领事馆提供

# ພິທີເປີດສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ທີ່ນະຄອນຊຽງໄຮ້ ສປ ຈີນຢ່າງເປັນທາງການ




## 老挝驻上海总领事馆举行开馆仪式

1月8日，老挝驻上海总领事馆举行开馆仪式。中国外交部副部长谢杭生、老挝外交部副部长孙通·赛亚加、老挝驻华大使宋迪·本库共同为总领馆揭牌。上海市常务副市长屠光绍、老挝驻上海总领事西沙美·銮珍达翁、各国驻上海使节以及上海社会各界人士参加了开馆仪式。

ໃນວັນທີ 8 ມັງກອນ 2014,ໄດ້ຈັດໃຫ້ມີພິທີເປີດສະຖານກົງສຸນໃຫຍ່ ສປປ ລາວ ທີ່ນະຄອນຊຽງໄຮ້ ສປ ຈີນ.ທ່ານ ເຊຍ ຮາງເຊິງ,ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດຈີນ,ທ່ານ ດຣ.ນາງ ສູນທອນ ໄຊຍະຈັກ,ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດລາວ,ທ່ານ ສົມດີ ບຸນຄຸ້ມ,ເອກອັກຄະລັດຖະທູດລາວປະຈໍາ ສປ ຈີນໄດ້ຮ່ວມກັນເປີດປ້າຍໃຫ້ແກ່ສະຖານກົງສຸນໃຫຍ່.ທ່ານ ທູ ກວາງຊາວ,ຮອງເຈົ້າຄອງຜູ້ປະຈໍາການນະຄອນຊຽງໄຮ,ທ່ານ ນາງ ສີສະໄໝ ຫຼວງຈັນດາວົງ,ກົງສຸນໃຫຍ່ ສປປ ລາວ ທີ່ນະຄອນຊຽງໄຮ້,ນັກການທູດ ແລະ ພະນັກງານກົງສຸນປະເທດຕ່າງໆປະຈໍານະຄອນຊຽງໄຮ້ພ້ອມດ້ວຍຕົວແທນທີ່ມາຈາກວົງການຕ່າງໆໃນສັງຄົມຂອງນະຄອນຊຽງໄຮ້ໄດ້ເຂົ້າຮ່ວມພິທີດັ່ງກ່າວ.

ໃນບາງຕອນຂອງການປາໃສ ທ່ານ ສົມດີ ບຸນຄຸ້ມ,ເອກອັກຄະລັດຖະທູດລາວ ປະຈໍາ ສປ ຈີນກ່າວວ່າ,ນະຄອນຊຽງໄຮ້ເປັນຕົວເມືອງສາກົນທີ່ມີຊື່ສຽງໃນໂລກ, ມີປະຫວັດສາດອັນຍາວນານ,ທັງມີຄວາມຈະເລີນຮຸ່ງເຮືອງທີ່ທັນສະໄໝ.ການເປີດສະຖານກົງສຸນໃຫຍ່ຢູ່ນະຄອນຊຽງໄຮ້ແມ່ນເປັນການຈັດຕັ້ງປະຕິບັດມະຕິຕົກລົງລະຫວ່າງລັດຖະບານສອງປະເທດກ່ຽວກັບການສ້າງສະຖານກົງສຸນໃຫຍ່ຢູ່ທັງສອງປະເທດ,ເຊິ່ງຈະນໍາຜົນດີຕໍ່ການແລກປ່ຽນ ແລະ ການຮ່ວມມືລະຫວ່າງລາວກັບແຂວງຈຽງຊູ ແຂວງເຈີ້ຈ່ຽງ,ອານຮຸຍ ແລະ ນະຄອນຊຽງໄຮ້ ທີ່ເປັນເຂດທີ່ມີລະດັບພັດທະນາສູງຂອງຈີນ,ທັງເຮັດໃຫ້ມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືໄດ້ຮັບການຍົກລະດັບສູງຂຶ້ນຢ່າງຮອບດ້ານ.

ກ່ອນພິທີເປີດສະຖານກົງສຸນໃຫຍ່,ທ່ານ ທູ ກວາງຊາວ,ຮອງເຈົ້າຄອງຜູ້ປະຈໍາການນະຄອນຊຽງໄຮ້ໄດ້ຕ້ອນຮັບຄະນະຜູ້ແທນລາວທີ່ນໍາໂດຍ ທ່ານ ດຣ. ນາງ ສູນທອນ ໄຊຍະຈັກ,ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດລາວ.

ທ່ານ ທູ ກວາງຊາວ ໄດ້ສະແດງຄວາມຊົມເຊີຍຕໍ່ການເປີດສະຖານກົງສຸນໃຫຍ່ຂອງປະເທດລາວທີ່ນະຄອນຊຽງໄຮ,ແລະ ຍິນດີຕ້ອນຮັບການໄປຢ້ຽມຢາມຂອງຄະນະຜູ້ແທນລາວ.ທ່ານກ່າວວ່າ,ຈີນ ແລະ ລາວ





ເປັນປະເທດບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນ,ການຂະຫຍາຍຕົວຂອງສາຍພົວພັນສອງປະເທດສອດຄ່ອງກັບຜົນປະໂຫຍດອັນເລິກເຊິ່ງຂອງປະຊາຊົນສອງຊາດ.ປະເທດລາວເປີດສະຖານກົງສຸນໃຫຍ່ຢູ່ນະຄອນຊຽງໄຮ,ຈະເພີ່ມທະວີຄວາມເຂົ້າໃຈລະຫວ່າງປະຊາຊົນ,ຊຸກຍູ້ການຮ່ວມມືລະຫວ່າງນະຄອນຊຽງໄຮກັບປະເທດລາວໃນຂົງເຂດຕ່າງໆ.ນະຄອນຊຽງໄຮເປັນຕົວເມືອງໃຫຍ່ທີ່ມີລັກສະນະສາກົນ,ພວມເລັ່ງລັດການກໍ່ສ້າງໃຫ້ເປັນ“4 ສູນກາງ”ສະນັ້ນ,ການຮ່ວມມືລະຫວ່າງນະຄອນຊຽງໄຮ້ກັບປະເທດລາວແມ່ນຈະນໍາເອົາຜົນປະໂຫຍດ ແລະ ບົດຮຽນໃໝ່ສູ່ອະນາຄົດ.ສະຖານກົງສຸນໃຫຍ່ລາວທີ່ຊຽງໄຮແຫ່ງນີ້ຈະເຕັມໄປດ້ວຍຄວາມມຸ້ງຫວັງໃນການເສີມຂະຫຍາຍບົດບາດການເປັນຂົວຕໍ່,ນໍາໃຊ້ທ່າແຮງຂອງຕົນຊຸກຍູ້ການແລກປ່ຽນການຮ່ວມມືດ້ານເສດຖະກິດ,ການລົງທຶນ,ວັດທະນະທໍາ ແລະ ການທ່ອງທ່ຽວ,ເພີ່ມທະວີການຮ່ວມມື ແລະ ຂະຫຍາຍສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານລະຫວ່າງສອງປະເທດຈີນ-ລາວໃຫ້ລົງສູ່ລວງເລິກ.

ທ່ານ ດຣ.ນາງ ສູນທອນ ໄຊຍະຈັກໄດ້ສະແດງຄວາມເຫັນດີຕໍ່ການຕີລາຄາຂອງທ່ານທູກວາງຊາວກ່ຽວກັບການພົວພັນລາວຈີນ,ກໍ່ສະແດງຄວາມຂອບໃຈຕໍ່ອໍານາດການປົກຄອງນະຄອນຊຽງໄຮ້ທີ່ໃຫ້ການສະໜັບສະໜູນຢ່າງແຂງແຮງຕໍ່ການເປີດສະຖານກົງສຸນໃຫຍ່ລາວທີ່ຊຽງໄຮ.ສອງປະເທດ ລາວ-ຈີນ ເປັນ“ບ້ານໃກ້ເຮືອນຄຽງທີ່ດີ,ເພື່ອນມິດທີ່ດີ,ສະຫາຍທີ່ດີ,ແລະ ຄູ່ຮ່ວມມືທີ່ດີຕໍ່ກັນ”,ທັງສອງປະເທດຈະສືບຕໍ່ເພີ່ມທະວີການຮ່ວມມື ແລະ ການແລກປ່ຽນໃນດ້ານຕ່າງໆ,ຊຸກຍູ້ໃຫ້ສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານລະຫວ່າງສອງປະເທດຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ສະຖານກົງສູນໃຫຍ່ ລາວ ທີ່ຊຽງໄຮ້ແຫ່ງໃໝ່ນີ້ແມ່ນສະຖານກົງສຸນໃຫຍ່ແຫ່ງທີ 4,ເຊິ່ງຜ່ານມາແມ່ນມີຢູ່ຄຸນໝິງ,ຮົງກົງ,ແລະ ນານນິງ.

图 /CFP

# ສປປ ລາວ ເຂົ້າຮ່ວມກອງປະຊຸມສາກົນກ່ຽວກັບການຄ້າ ສັດປ່າທີ່ຜິດກົດໝາຍທີ່ຈັດຂຶ້ນຢູ່ລອນດອນ

## 老挝出席在伦敦举行的非法野生动物贸易国际会议

2014 年 2 月 11—13 日，老挝农林部副部长蓬巴里萨 · 巴拉翁荣坎博士率团出席了在英国伦敦举行的关于非法野生动物贸易的国际会议。为反对非法野生动物贸易做出的积极努力予以新的大力推动和促进。

ສປປ ລາວໄດ້ເຂົ້າຮ່ວມກອງປະຊຸມສາກົນກ່ຽວກັບການຄ້າສັດປ່າທີ່ຜິດກົດໝາຍເຊິ່ງຈັດຂຶ້ນທີ່ລອນດອນ, ປະເທດອັງກິດໃນລະຫວ່າງວັນທີ11-13 ກຸມພາປີ 2014. ທ່ານ ດຣ ພອງປະຣິສັກ ປຣະວົງຄໍາລັດຖະມົນຕີຊ່ວຍວ່າການກະຊວງກະສິກໍາ ແລະ ປ່າໄມ້ນໍາຄະນະຜູ້ແທນລາວເຂົ້າຮ່ວມກອງປະຊຸມດັ່ງກ່າວເພື່ອສະໜອງແຮງຊຸກດັນອັນໃໝ່ຕໍ່ຄວາມພະຍາຍາມໃນທົ່ວໂລກໃນການຕໍ່ຕ້ານການຄ້າສັດປ່າຜິດກົດໝາຍ.

ກອງປະຊຸມວາງເປົ້າໝາຍທີ່ຈະຍົກລະດັບບັນຫາການຄ້າສັດປ່າທີ່ຜິດກົດໝາຍໃຫ້ເປັນບັນຫາທີ່ໃຫຍ່ກວ່າການເປັນພຽງບັນຫາທາງດ້ານສິ່ງແວດລ້ອມເທົ່ານັ້ນ, ໃນຕົວຈິງແລ້ວການຄ້າສັດປ່າທີ່ຜິດກົດໝາຍຍ້ອນອ້າງເປັນອຸດສາຫະກໍາ ແລະ ສ້າງລາຍຮັບເປັນຈໍານວນຫຼາຍຕື້ໃນແຕ່ລະປີ,ເປັນສິ່ງຈູງໃຈເຮັດໃຫ້ເກີດມີການສໍ້ລາດບັງຫຼວງ ແລະ ຄວາມບໍ່ໝັ້ນຄົງ,ບັ່ນທອນ ແລະ ທໍາລາຍຄວາມພະຍາຍາມໃນການຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມຍືນຍົງຂອງການພັດທະນາ ແລະ ເຊັ່ນດຽວກັນມັນຍັງເປັນການສົ່ງເສີມການເຊື່ອມໂຍງໄປສູ່ການກໍ່ການຮ້າຍນໍາອີກ,ຈຸດປະສົງຂອງກອງປະຊຸມແມ່ນເພື່ອປັບປຸງການບັງຄັບໃຊ້ກົດໝາຍ,ພາລະບົດບາດຂອງລະບົບຍຸຕິທໍາທາງອາຍາ,ຫຼຸດຜອນຄວາມຕ້ອງການທາງດ້ານຜະລິດຕະພັນສັດປ່າ ແລະ ສະໜັບສະໜູນການພັດທະນາທາງດ້ານວັດຖຸການທໍາມາຫາກິນທີ່ມີຄວາມຍືນຍົງສໍາລັບຊຸມຊົນທີ່ໄດ້ຮັບຜົນກະທົບຈາກການຄ້າສັດປ່າທີ່ຜິດກົດໝາຍ. ກອງປະຊຸມຈະເນັ້ນໜັກໃສ່ສັດສາມສາຍພັນທີ່ໂດດເດັ່ນ ແລະ ກໍາລັງຈະສູນພັນນັ້ນຄືຊ້າງ,ເສືອ ແລະ ແຮດເຊິ່ງສັດເຫຼົ່ານີ້ເປັນເປົ້າໝາຍຫຼັກຂອງການກະທໍາທີ່ມີຄວາມຜິດທາງອາຍາ.

ກອງປະຊຸມລອນດອນ(London Conference) ກ່ຽວກັບການຄ້າສັດປ່າທີ່ຜິດກົດໝາຍຖືກຈັດຂຶ້ນໂດຍການເປັນເຈົ້າພາບຂອງທ່ານນາຍົກລັດຖະມົນຕີເດວິດຄາເມຣອນຮ່ວມກັບບັນດາສະມາຊິກຂອງພຣະລາດຊະວົງອັງກິດເຊິ່ງລວມມີເຈົ້າຟ້າຊາຍ ຊາຣລ໌(Prince Charles) ,ມູນນິທິພຣະລາດຊະວົງດຸກ ແລະ ດັຊເຊສ໌ແຫ່ງແຄມບຣິຈ໌(the Royal Foundation of the Duke and Duchess of Cambridge) ແລະ ເຈົ້າຊາຍແຮຣີ(Prince Harry) ,ແລະ ເຊັ່ນດຽວກັນກໍ່ມີອົງກອນການຮ່ວມມືເພື່ອສັດປ່າ(United for Wildlife),ເຊິ່ງເປັນການຮ່ວມມືກັນລະຫວ່າງມູນນິທິແຫ່ງພຣະລາດຊະວົງ ແລະ ເຈັດອົງກອນທີ່ມີອິດທິພົນທີ່ສຸດໃນການອະນຸລັກຂອງໂລກ ແລະ ນອກນັ້ນກໍ່ຍັງມີບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ(NGOs) ,ຈໍານວນຫຼວງຫຼາຍເຂົ້າຮ່ວມນໍາ.




ສະຖານທີ່ສະຖານທູດອັງກິດປະຈໍາລາວຈັດງານສົ່ງເສີມຄວາມຮັບຮູ້ກ່ຽວກັບການຄ້າສັດປ່າທີ່ຜິດກົດໝາຍ
英国非法野生动物贸易会议现场

ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສ່ວນໃຫຍ່ແມ່ນມາຈາກບັນດາປະເທດທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດຈາກການຄ້າສັດປ່າທີ່ຜິດກົດໝາຍ ແລະ ພັນທະມິດຈາກບັນດາກຸ່ມປະເທດອຸດສາຫະກໍາຂັ້ນນໍາຂອງໂລກ(G8).ສປປ ລາວໄດ້ຖືກຈັດເປັນປະເທດບຸລິມະສິດສໍາລັບກອງປະຊຸມດັ່ງກ່າວ.

ກ່ອນທີ່ຈະເຖິງມື້ເປີດກອງປະຊຸມລອນດອນ,ສະຖານທູດອັງກິດທີ່ວຽງຈັນໄດ້ຈັດງານສົ່ງເສີມຄວາມຮັບຮູ້ກ່ຽວກັບການຄ້າສັດປ່າທີ່ຜິດກົດໝາຍຂຶ້ນໃນວັນພຸດທີ 5 ກຸມພາ 2014.ແຂກທີ່ຖືກເຊີນເຂົ້າຮ່ວມໃນງານດັ່ງກ່າວລວມມີບັນດາພະນັກງານຈາກອົງການຈັດຕັ້ງພາກລັດທີ່ກ່ຽວຂ້ອງ,ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງພາກປະຊາຊົນພ້ອມດ້ວຍບັນດາເຈົ້າໜ້າທີ່ການທູດ.

ໃນການກ່າວເປີດງານ,ທ່ານຟີລິບມາໂລນ,ເອກອັກຄະລາຊະທູດຜູ້ມີອໍານາດເຕັມແຫ່ງປະເທດອັງກິດປະຈໍາ ສປປ ລາວໄດ້ກ່າວວ່າ: ພວກຂ້າພະເຈົ້າມີຄວາມຍິນດີທີ່ສາມາດສະໜັບສະໜູນລັດຖະບານແຫ່ງ ສປປ ລາວເຂົ້າຮ່ວມໃນງານທີ່ມີຄວາມສໍາຄັນນີ້ ແລະ ຍິນດີຕ້ອນຮັບຄວາມມຸ້ງໝັ້ນຂອງລັດຖະບານລາວທີ່ຈະຕໍ່ຕ້ານການຄ້າສັດປ່າທີ່ຜິດກົດໝາຍ.ຂ້າພະເຈົ້າຫວັງວ່າກອງປະຊຸມລອນດອນຈະສົ່ງຜົນຕໍ່ຄໍາໝັ້ນສັນຍາໃນບາດກ້າວຕໍ່ໄປທີ່ຈະດໍາເນີນການເພື່ອຢຸດຕິການຄ້າສັດປ່າທີ່ຜິດກົດໝາຍ ແລະ ເພື່ອວ່າບັນດາຄູ່ຮ່ວມງານສາກົນສາມາດເຮັດວຽກຮ່ວມກັບລັດຖະບານລາວເພື່ອບັນລຸເປົ້າໝາຍເຫຼົ່ານີ້ໃຫ້ປະກົດຜົນເປັນຈິງ.

图 / 新华社

# ເສດຖະກິດການຄ້າຈີນ-ອາຊຽນເລື່ອນຊັ້ນ ອອກເຮືອສາຍໄໝ "ເພັດນິນຈິນດາ 10 ປີ"

**中国 – 东盟经贸升级 启航丝路“钻石十年”**

过去十年见证了中国 – 东盟的“黄金”合作。2014 年，双方经贸升级的“钻石十年”新局开启。人们期待，历史上曾带来富足繁荣的海上丝绸之路，在新的十年造福这片山水相连的土地。

10 ປີທີ່ຜ່ານມາເປັນສັກຂີພິຍານການຮ່ວມມືຄຳລະຫວ່າງຈີນ-ອາຊຽນ.ໃນປີ 2014,ໄດ້ເລີ່ມຕົ້ນເປີດໂສມໜ້າໃໝ່“10 ປີແຫ່ງເພັດນິນຈິນດາ ”ຂອງເສດຖະກິດການຄ້າທັງສອງຝ່າຍໄດ້ເລື່ອນຊັ້ນຂື້ນ.ຜູ້ຄົນທັງຫຼາຍມີຄວາມປາຖະໜາໃຫ້ທາງສາຍໄໝອຸດົມຮັ່ງມີທີ່ມາຈາກທະເລໃນປະຫວັດສາດ,ໃນ 10 ປີນັ້ນໃໝ່ທີ່ຈະມາເຖິງນີ້ຈະສ້າງຄວາມຜາສຸກແກ່ແຜ່ນດິນທີ່ມີພູຜາແມ່ນ້ຳຕິດຈອດກັນດັ່ງກ່າວນີ້.

